# ພຣະວັດຈະນະ

ຂອງ

# ພຣະຜູ້ເປັນເຈົ້າ



## ປະມວນບົດສູດໄຫວ້ວອນ

## ແລະ ຄຳສອນຂອງສາສະໜາບາຮາຍ

# ພຣະວັດຈະນະຂອງພຣະຜູ້ເປັນເຈົ້າ
# ປະມວນບົດສູດໄຫວ້ວອນ ແລະ ຄຳສອນ
# ຂອງ ສາສະໜາ ບາຮາຍ

ຈົ່ງດຳນຸດລົງພື້ນວັງນະທາສະມຸດ ແຫ່ງ ພຣະວັດຈະນະຂອງເຮົາພຣະອົງ ເພື່ອຈະໄດ້ຄົ້ນເຫັນຄວາມເລິກລັບໃນພຣະທຳ ແລະ ຈະໄດ້ຄົ້ນພົບໄຂ່ມຸກແຫ່ງອັດສະລິຍະທີ່ແຝງເລິກຢູ່ໃນຄວາມລ້ຳລຶກນັ້ນ.

– ພຣະບາຮາອຸລລາຫ໌

ລວບລວມໂດຍ

ສູນກາງ ສາສະໜາ ບາຮາຍ ແຫ່ງໂລກ

ປີ ຄ.ສ. 1981

## ບົດສູດໄຫວ້ວອນປະຈຳວັນ

### ອະທິຖານໄຫວ້ວອນລະຫວ່າງເວລາທ່ຽງວັນ ຈົບເຖິງພະອາທິດລັບລ່ຽມລົງວັນລະຄັ້ງ

ໂອພຣະຜູ້ເປັນເຈົ້າ ຂ້າພຣະອົງ ຂໍເປັນສັກຂີພະຍານວ່າ ພຣະອົງໄດ້ຊົງສ້າງຂ້າພຣະອົງຂຶ້ນມາ ເພື່ອຈະໄດ້ຮູ້ຈັກ ແລະ ນະມັດສະການພຣະອົງ ບັດນີ້ຂ້າພຣະອົງໄດ້ຮູ້ແຈ້ງເຫັນຈິງເຖິງຄວາມປາສະຈາກ ອຳນາດວາດສະໜາຂອງຂ້າພຣະອົງ ຕໍ່ການຊົງສັກດານຸພາບຂອງພຣະອົງ ຕໍ່ຄວາມອຸດົມຮັ່ງມີຂອງພຣະອົງ.

ບໍ່ມີພຣະຜູ້ເປັນເຈົ້າອື່ນໃດອີກ ນອກຈາກພຣະອົງ ພຣະຜູ້ຊົງຊ່ວຍເຫຼືອໃນຍາມທີ່ເຮົາໄດ້ຮັບໄພອັນຕະລາຍ ພຣະອົງຊົງເປັນຢູ່ດ້ວຍພຣະອົງເອງ.

*— ພຣະບາຮາອູລລາຫ໌.*

### ສູດໄຫວ້ວອນຕອນເຊົ້າຍາມອາລຸ່ມຮຸ່ງຂຶ້ນ

ໂອ ພຣະຜູ້ເປັນເຈົ້າ ທີ່ຍິ່ງໃຫຍ່ ຂອງຂ້າພຣະອົງ ຂ້າພຣະອົງ ເປັນຜູ້ຮັບໃຊ້ພຣະອົງ ເປັນບຸດ

ຫຼານທີ່ຄອຍຮັບໃຊ້ພຣະອົງ ເມື່ອຂ້າພຣະອົງຕື່ນຂຶ້ນມາ ກ່ອນອາລຸນຮຸ່ງຂຶ້ນ ດວງດາລາແຫ່ງຄວາມເປັນເອກະພາບ ໄດ້ສາຍແສງຈາກແສງອາລຸນ ແຫ່ງພຣະປະສົງຂອງພຣະອົງ ສ່ອງລັດສະໝີໄປທົ່ວມູນໂລກຕາມຄຳບັນຊາໃນພຣະທຳບັນຍັດຂອງພຣະອົງ.

ຂ້າພຣະອົງ ຂໍເທີດທູນສັນລະເສີນພຣະຜູ້ເປັນເຈົ້າທີ່ພຣະອົງຊົງເມດຕາໃຫ້ເຮົາຕື່ນຂຶ້ນມາພົບພໍ້ແສງແຫ່ງພຣະປັນຍາອັນຮຸ່ງເຮືອງ ຂອງພຣະອົງ ຍຶດໝັ້ນຢູ່ກັບພຣະອົງ ບໍ່ມີພຣະຜູ້ເປັນເຈົ້າອື່ນໃດນອກຈາກພຣະອົງ-ອົງດຽວທີ່ປຽບບໍ່ໄດ້, ຈົ່ງບັນດານ ຢ່າໃຫ້ຂ້າພຣະອົງຫຼກພັນຢູ່ກັບສິ່ງອື່ນ ນອກຈາກພຣະອົງ ຂໍຊົງໂປຣດລິຂິດແຕ່ສິ່ງທີ່ດີງາມສຳຫຼັບໂລກນີ້ ແລະ ໂລກໜ້າ ໃຫ້ແກ່ຂ້າພຣະອົງແກ່ຜູ້ທີ່ຮັກແພງທັງຊາຍ ແລະຍິງ ຂອງຂ້າພຣະອົງທັງຫຼາຍ, ຂໍພຣະເດຊາອຳນາດຄຸ້ມຄອງ ທີ່ບໍ່ເສື່ອມສະລາຍຂອງພຣະອົງ ໂອ ! ພຣະອົງເປັນທີ່ຮັກຂອງສັບພະສິ່ງທັງມວນ ພຣະອົງເປັນຍອດແຫ່ງຄວາມປາຖະໜາຂອງຂ້າ, ໃນທົ່ວຂອບຟ້າຈັກກະວານ ຈົ່ງປົກປ້ອງພວກເຮົາທັງຫຼາຍ ໃຫ້ປອດໄພຈາກບັນດາ ຜູ້ທີ່ກະຊິບ

ຄວາມຊົ່ວຮ້າຍ ໃນຈິດໃຈຂອງມະນຸດ ພຣະອົງຊົງອຳນາດໃນການກະທຳສິ່ງ ທີ່ຊົມຊື່ນຊົມຍິນດີ ພຣະອົງຄືພຣະຜູ້ຊົງມະຫິດທານຸພາບ ພຣະຜູ້ຊົງຊ່ວຍເຫຼືອ ໃນຍາມທີ່ເຮົາໄດ້ຮັບໄພອັນຕະລາຍ ພຣະອົງຊົງສະຖິດໂດຍລຳພັງຂອງພຣະອົງ.

ອ້ອນວອນພຣະຜູ້ເປັນເຈົ້າ ຈົ່ງຊົງອຳນວຍອວຍພອນແດ່ຜູ້ຊື່ງພຣະອົງ ຂະບະນາມອັນປະເສີດຊື່ງພຣະອົງຊົງຈຳແນກຄົນດີແລະຄົນຊົ່ວ ຂໍຊົງພຣະເມດຕາຊ່ວຍເຫຼືອໃຫ້ເຮົາກະທຳໃນສິ່ງທີ່ພຣະອົງຊົງຮັກ ແລະພໍພະໄທ ຂໍພຣະຜູ້ເປັນເຈົ້າ ຊົງອວຍສິດທິພຣະພອນແດ່ຜູ້ທີ່ເປັນຖ້ອຍຄຳວັດຈະນະ ແລະ ເປັນຕົວອັກສອນຂອງພຣະອົງ ໃຫ້ແກ່ບັນດາຜູ້ທີ່ມຸ່ງຄວາມຫວັງຫັນໜ້າສູ່ພຣະອົງ ແລະ ສະດັບຮັບຟັງຄວາມຮຽກຮ້ອງຂອງພຣະອົງ.

ພຣະອົງເປັນພຣະຜູ້ເປັນເຈົ້າທີ່ແທ້ຈິງ ຊົງເປັນພຣະລາຊາຂອງມະນຸດທັງມວນ ຊົງອຳນາດ ດົນບັນດານເໜືອທຸກສິ່ງທຸກຢ່າງ.

*– ພຣະບາຮາອຸລລາຫ໌*

# ສູດໄຫວ້ວອນຕອນເຊົ້າ

ໂອ ພຣະຜູ້ເປັນເຈົ້າ ຂ້າພະອົງ ໄດ້ຕື່ນຂຶ້ນມາ ພາຍໃຕ້ຮົ່ມເງົາ ແຫ່ງ ພຣະປາລະມີ ຂອງພຣະອົງ ຫາກຜູ້ໃດຂະແຫວງ ຫາໂພທິສົມພານ ຂອງພຣະອົງ ເຂົາຜູ້ນັ້ນຈະດຳລົງຊີວິດ ຢູ່ຢ່າງປອດໄພ ພາຍໃຕ້ ຄວາມຄຸ້ມຄອງປ້ອງກັນປະກັນໄພຂອງພຣະອົງ.

ໂອພຣະຜູ້ເປັນເຈົ້າ ຈົ່ງໂຜດປະທານແສງສະຫວ່າງເຂົ້າໃສ່ຈິດວິນຍານຂອງຂ້າພະອົງ ດ້ວຍແສງແຫ່ງພຣະທຳອັນປະເສີດ ແຫ່ງ ການເປີດເຜີຍຂອງພຣະອົງ ເຊັ່ນດຽວທີ່ພຣະອົງ ຈົ່ງໂຜດປະທານແສງສະຫວ່າງ ໃຫ້ແກ່ຮູບກາຍພາຍນອກ ຂອງຂ້າພຣະອົງ ລັດສະໝີແສງແຫ່ງພຣະກະລຸນາຂອງພຣະອົງ.

*- ພຣະບາຮາອຸລລາຫ.*

ໂອພຣະຜູ້ເປັນເຈົ້າ ຂ້າພະອົງໄດ້ຕື່ນຂຶ້ນມາຍາມຮງເຊົ້ານີ້ ແຫ່ງພຣະກະລຸນາ ຂອງ ພຣະອົງຂ້າພຣະອົງອອກຈາກບ້ານເຮືອນມາ ດ້ວຍຄວາມເຊື່ອໝັ້ນ ໄວ້ວາງໃຈພຣະອົງ ຢ່າງສູງສຸດ ຂໍມອບກາຍຖວາຍຕົວ ໃຫ້ຢູ່ໃນ

ຄວາມ ພິທັກຮັກສາ ຂອງພຣະອົງ ຂໍຈົ່ງປະທານ ພຣະພອນຈາກສວງສະຫວັນ ແຫ່ງພຣະເມດຕາຂອງພຣະອົງເໝືອນກັນກັບເວລາ ຂ້າພຣະອົງເດີນທາງມາ ຂໍໃຫ້ຂ້າພຣະອົງ ເດີນທາງກັບຄືນບ້ານດ້ວຍຄວາມປອດໄພພາຍໃຕ້ຄວາມຄຸ້ມຄອງ ຂອງພຣະອົງ ດ້ວຍຄວາມນຶກຄິດຂອງຂ້າພຣະອົງ ທີ່ຍຶດໝັ້ນ ໃນພຣະອົງ ບໍ່ມີພຣະຜູ້ເປັນເຈົ້າອົງອື່ນອີກນອກຈາກພຣະອົງ ພຣະຜູ້ຊົງເປັນເອກະພາບ ພຣະອົງຊົງຮອບຮູ້ທຸກສິ່ງທຸກຢ່າງ ໂດຍຫາສິ່ງອື່ນປຽບທຽບບໍ່ໄດ້ ພຣະຜູ້ຊົງ ພຣະທຸພຣະຊຸດ ພຣະອົງຊົງປຣີຊາຍານເໝືອສັບພະສິ່ງທັງມວນ.

*–ພຣະບາຣາອຸລລາຫ.*

## ສູດໄຫວ້ວອນຕອນກາງຄືນ

ໂອ ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງ ຊົງເປັນພຣະເຈົ້າ ຂອງຂ້າພຣະອົງ ແລະ ຢູ່ໃນຄວາມມຸ່ງໝາຍ ແຫ່ງຄວາມປາຖະໜາຂອງຂ້າພຣະອົງ ຄືນຮັບໃຊ້ ຂອງພຣະອົງຜູ້ນີ້ສະແຫວງຫາທີ່ນອນພາຍໃຕ້ແສງແຫ່ງພຣະເມດຕາຂອງພຣະອົງ ປາຖະໜາພັກຜ່ອນໃຕ້ລຸ່ມຟ້າຂອບຈັກ

ກະວານ ແຫ່ງ ພຣະກະລຸນາ ຂອງພຣະອົງ ວິງວອນຂໍ ຄວາມຮັກ ແລະ ຄວາມຄຸ້ມຄອງຈາກພຣະອົງ.

ໂອ ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າພຣະອົງຂໍອ້ອນວອນ ຕໍ່ພຣະອົງເຈົ້າ ໂດຍພຣະຈັກຂຸຂອງພຣະອົງທີ່ບໍ່ເຄີຍຫຼັບ ນັ້ນ ຂໍຈົ່ງອະພິບານ ຮັກສາດວງຕາຂອງຂ້າ ຈາກການ ເບິ່ງສິ່ງອື່ນໃດ ນອກຈາກພຣະອົງ ຈົ່ງຊົງໃຫ້ກຳລັງ ແກ່ ດວງຕາຂອງພວກຂ້າທັງຫຼາຍ ໃຫ້ເຫັນສັນຍາລັກ ຂອງ ພຣະອົງ ແລະ ເພັ່ງມອງເບິ່ງຂອບຈັກກະວານແຫ່ງການ ເປີດເຜີຍຂອງພຣະອົງ ພຣະອົງຜູ້ຊົງທ່ຳຍິ່ງໃຫຍ່ເໜືອ ອຳນາດທັງມວນ ແລະ ອຳນາດໃດໆ ຈະຕ້ອງຍິນຍອມ ຢ້ານກົວຕໍ່ພຣະເດຊານຸພາບຂອງພຣະອົງ.

ບໍ່ມີ ພຣະຜູ້ເປັນເຈົ້າອື່ນໃດ ນອກຈາກພຣະອົງເທົ່າ ນັ້ນ ຜູ້ຊົງເດຊານຸພາບ ຜາບແພ້ສັບພະສິ່ງທັງປວງໂດຍ ຫາປະມານບໍ່ໄດ້ ແລະ ຊົງເປັນຢູ່ດ້ວຍພຣະອົງເອງ.

*ພຣະບາຣາອຸລລາຫ.*

## ໄຫວ້ວອນເທດສະການຖືສິນ ອົດພະຂັນຕີ

ໂອ ຂ້າແດ່ພຣະຜູ້ເປັນເຈົ້າ ພຣະຜູ້ເປັນເຈົ້າຂອງ ຂ້າພຣະອົງ ຂໍຄວາມສັນລະເສີນ ຈົ່ງມີແດ່ພຣະອົງ ຂ້າ

ພຣະອົງຂໍວິງວອນ ຕໍ່ພຣະທຳ ແຫ່ງການເປີດເຜີຍຊຶ່ງ ປ່ຽນຄວາມມືດໃຫ້ເປັນແສງສະຫວ່າງ ຂໍອະທິຖານຕໍ່ຄຳ ສັ່ງສອນ ຈົ່ງດົນບັນດານໃຫ້ມີການກໍ່ສ້າງໂບດ (ວັດ)ຊຶ່ງ ມີສາສະນິກກະຊົນໄປຖະຫວາຍສັກກະລະບູຊາສະເໝີ ຂໍ ອ້ອນວອນຕໍ່ພຣະທຳ ຊຶ່ງເປັນທີ່ມາແຫ່ງການເປີດເຜີຍ ເປັນພຣະອັກສອນ ໃນພຣະຄຳພີ ຂໍອະທິຖານຕໍ່ມ້ອນ ພຣະຄຳພີທີ່ເຜີຍກາງອອກ ຂໍໄຫວ້ວອນຕໍ່ ພຣະອົງຈົ່ງ ປະທານສິ່ງທີ່ຈະດຶງດູດ ຂ້າພຣະອົງຕະຫຼອດຈົນຍາດມິດ ທຸກຖ້ວນໜ້າຂອງພຣະອົງ ໃຫ້ຂຶ້ນໄປສູ່ສວງສະຫວັນອັນ ຮຸ່ງເຮືອງຂອງພຣະອົງ ຂໍຊົງປະທານສິ່ງທີ່ຈະຂັດລາງ ຮອຍແຫ່ງຄວາມລະແວງແຄງໃຈ ຊຶ່ງເປັນອຸປະສັກຕໍ່ ຜູ້ທີ່ເຂົ້າສູ່ສັກກະລະສະຖານແຫ່ງຄວາມສາມັກຄີທຳຂອງ ພຣະອົງ ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າພຣະອົງ ຜູ້ທີ່ຍຶດຖື ສາຍສຳພັນແຫ່ງຄວາມເມດຕາປານີຂອງພຣະອົງ ຂ້າ ພຣະອົງຂໍເກາະຊາຍສະຫຼອງພຣະອົງ ແຫ່ງຄວາມເມດ ຕາ ຂອງພຣະອົງ ຂໍພະອົງຊົງດົນບັນດານ ແຕ່ສິ່ງທີ່ດີ ງາມ ທັງໃນໂລກນີ້ ແລະ ໂລກໜ້າແກ່ຂ້າພຣະອົງ ແລະ ແກ່ບຸກຄົນທີ່ຜູກພັນຮັກໄຄ່ໃນຕີ ຂໍພຣະອົງ ຊົງມອບ

24/VII

ຂອງຂວັນ ຊົງຕັ້ງພະໄທໃຫ້ບຸກຄົນທີ່ເລືອກເຟັ້ນໄວ້ແລ້ວ ໃນບັນດາທີ່ພຣະອົງຊົງສ້າງ.

ໂອ ຂ້າແດ່ພຣະຜູ້ເປັນເຈົ້າ ວັນເຫຼົ່ານີ້ລ້ວນແຕ່ວັນທີ່ພຣະອົງຊົງປັນຊາໃຫ້ແກ່ເຫຼົ່າສາສະນິກກະຊົນ ປະຕິບັດຖືສິດອົດພະຂັນຕີ ຂໍພຣະພອນ ຈົ່ງມີແດ່ຜູ້ທີ່ຖືສິນເຫຼົ່ານີ້ ເພື່ອພຣະອົງ ດ້ວຍນະໂມທຳທີ່ຕັດກິເລດອອກຈາກທຸກສິ່ງທຸກຢ່າງນອກຈາກພຣະອົງ ຂ້າແດ່ພຣະຜູ້ເປັນເຈົ້າ ຂໍພຣະອົງຊົງຊ່ວຍໃຫ້ຂ້າພຣະອົງ ແລະຊ່ວຍໃຫ້ຂ້າພຣະອົງທັງຫຼາຍສະດັບຮັບຟັງ ແລະ ຍຶດຖືຄຳສັ່ງສອນຂອງພຣະອົງໄວ້ ຢ່າງໝັ້ນຄົງແທ້ຈິງແລ້ວ ພຣະອົງຊົງມີອຳນາດ ດົນບັນດານທຸກສິ່ງທຸກຢ່າງທີ່ຊົງປາດຖະໜາ.

ບໍ່ມີພຣະຜູ້ເປັນເຈົ້າ ອື່ນໃດອີກ ນອກຈາກພຣະອົງ ພຣະຜູ້ຊົງຮອບຮູ້ ພຣະຜູ້ຊົງສໍລະຍານສະຫຼາດ ຂໍຄວາມສັນລະເສີນທັງມວນຈົ່ງມີແດ່ພຣະຜູ້ເປັນເຈົ້າ ຜູ້ຊົງເປັນແຫ່ງໂລກພິພົບທັງປວງ.

*– ພຣະອັບດຸລບາຮາ.*

## ສູດໄຫວ້ວອນເພື່ອຮັກສາປິ່ນປົວ

ພຣະນາມຂອງພຣະອົງ ຄືການຮັກສາປິ່ນປົວຂອງຂ້າພຣະອົງ ຂ້າແດ່ພຣະຜູ້ເປັນເຈົ້າຂອງຂ້າ ແລະ ການລະນຶກເຖິງພຣະອົງນັ້ນ ຄືເປັນຢາທິບພະໂອສົດຂອງຂ້າພຣະອົງ ການເຂົ້າໃກ້ພຣະອົງ ຄືຄວາມຫວັງຂອງຂ້າພຣະອົງ ແລະ ຄວາມຮັກທີ່ຂ້າພຣະອົງນັ້ນຄືມິດຂອງຂ້າພຣະອົງ ພຣະເມດຕາ ທີ່ພຣະອົງມີຕໍ່ຂ້າພຣະອົງນັ້ນ ຄືການຮັກສາປິ່ນປົວ ແລະ ຊ່ວຍເຫຼືອຂ້າພຣະອົງທັງໃນໂລກນີ້ ແລະ ໂລກໜ້າ ແທ້ຈິງແລ້ວ ພຣະອົງຄືພຣະຜູ້ຊົງພຣະກະລຸນາ ພຣະຜູ້ຊົງຮອບຮູ້ ແລະ ຊົງພຣະປິຊາຍານເໜືອສັບພະສິ່ງທັງມວນ.

*– ພຣະບາຮາອຸລລາຫ໌.*

## ສູດໄຫວ້ວອນໃນທີ່ປະຊຸມຫຼັກທຳມະ ສາສະໜາ ບາຮາຍ.

ໃນໂອກາດທີ່ເຈົ້າໄດ້ເຂົ້າປະຊຸມຮ່ວມຫຼັກທຳມະ ບາຮາຍຂໍຈົ່ງອະທິຖານບົດສູດມົນນີ້ ດ້ວຍຫົວໃຈທີ່ປິ່ມປິຕິຍິນດີດ້ວຍຄວາມຮັກຂອງພຣະຜູ້ເປັນເຈົ້າ ຈົ່ງໄຫວ້ວອນ

ຈາກປາກລີ້ນທີ່ບໍລິສຸດ ປາສາຈາກຄວາມມົນທິນຈາກສັບ
ພະສິ່ງທັງປວງ ເວົ້າແຕ່ຖ້ອຍຄຳສຳນຶກເຖິງພຣະອົງຈົ່ງ
ຕັ້ງຈິດຕັ້ງໃຈອະທິຖານ ໃນລັກສະນະເທີດທູນ ເພື່ອວ່າ
ພຣະ ຜູ້ຊົງອຳນາດສູງສຸດ ຈະໄດ້ຊົງເມດຕາກະລຸນາ
ຊ່ວຍເຫຼືອໃຫ້ເຈົ້າໄດ້ບັນລຸ ເຖິງຄວາມສຳເລັດອັນສູງ
ສົ່ງ.

ຂ້າແດ່ພຣະຜູ້ເປັນເຈົ້າພວກເຮົາຜູ້ຕັ້ງຈິດຕັ້ງໃຈຂອງ
ຜູ້ຮັບໃຊ້ເຫຼົ່ານີ້ ໄດ້ຫັນໜ້າຫາພຣະພັກອັນສັກສິດຂອງ
ພຣະອົງ ຊົງປົດເປື້ອງຕົນ ເປັນອິດສະລະອອກຈາກສັບ
ພະສິ່ງທັງປວງນອກຈາກພຣະອົງ ໃນຍຸກອັນຮຸ່ງເຮືອງນີ້
ພວກເຮົາທັງຫຼາຍທີ່ກຳລັງຮ່ວມປະຊຸມໃນຫຼັກທຳນະແຫ່ງ
ນີ້ ຈົ່ງນິມິດຄວາມມຸ່ງຫວັງໄປໃນທິດທາງດຽວກັນ ພວກ
ເຮົາທັງຫຼາຍ ມີເຈດຕະນາລົມຮ່ວມກັນເຊີດຊູພຣະວັດ
ຈະນະຂອງພຣະອົງ ໃຫ້ໂດດເດັ່ນໃນທ່າມກາງມວນມະ
ນຸດທັງປວງຂ້າແດ່ພຣະຜູ້ເປັນເຈົ້າ ພຣະຜູ້ເປັນເຈົ້າ
ຂອງພວກເຮົາ ຂໍພຣະອົງຊົງເສກສັນໃຫ້ພວກເຮົາເປັນ
ສັນຍາລັກ ແຫ່ງການນຳທາງອັນສັກສິດ ຂອງພຣະອົງ
ເປັນທຸງໄຊແຫ່ງສາລະໜາອັນສູງສົ່ງ ທີ່ປິວພັດທ່າມກາງ

ມະນຸດຊາດ ເປັນຜູ້ຮັບໃຊ້ພະກະຕິກາອັນຍິ່ງໃຫຍ່ຂອງ
ພຣະອົງຂ້າແດ່ພຣະຜູ້ເປັນເຈົ້າອັນສູງສົ່ງ ຂໍຈົ່ງດົນບັນ
ດານໃຫ້ເຮົາກາຍເປັນພາບສະແດງອອກ ຊຶ່ງຄວາມສາ
ມັກຄີທຳໃນອານາຈັກອັນຣາເປັນດວງດາຣາທີ່ສາຍແສງ
ໄປທົ່ວອານາບໍລິເວນ ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຈົ່ງຊົງ
ບັນດານໃຫ້ພວກເຮົາກາຍເປັນທະເລແຫ່ງພຣະກະລຸນາ
ທິຄຸນອັນສຸດຊຶ້ງ ເປັນສາຍທາລະທີ່ຫຼາກໄຫຼລົງມາຈາກ
ລະດັບຄວາມສູງອັນຮຸ່ງເຮືອງ ເປັນຜົນໝາກໄມ້ເທິງຕົ້ນ
ແຫ່ງປະຖົມເຫດ ທີ່ນຳໄປສູ່ທຳ ເປັນພືກສາໃນສວນສະ
ຫວັນທີ່ໄຫວພັດໄປຕາມກະແສພຣະບາລະມີຂ້າແດ່ພຣະ
ຜູ້ເປັນເຈົ້າ ຂໍໃຫ້ຈິດວິນຍານຂອງເຮົາທັງຫຼາຍໄດ້ເພິ່ງ
ພາຢູ່ກັບພຣະວັດຈະນະແຫ່ງຄວາມສາມັກຄີທຳຂໍໃຫ້ຫົວ
ໃຈຂອງພວກເຮົາຊື່ນຊົມຂຶ້ນ ດ້ວຍພຣະກະລຸນາທິຄຸນທີ່
ຫຼັ່ງໄຫຼລົງມາ ເພື່ອວ່າພວກເຮົາຈະໄດ້ສະນັກສະໝານ
ກັບເໝືອນດັ່ງໃນຕົ້ນມະຫາສະມຸດຈະໄດ້ຫຼໍ່ຫຼອມກົນກຽວ
ກັນ ປະດຸດເປັນລັງສີ ແຫ່ງລັດສະໝີຂອງພຣະອົງ ແມ້
ກະທັ້ງຄວາມຮູ້ສຶກນຶກຄິດຕະຫຼອດ ຈົນຄະຕິທຳ ຂອງ
ພວກເຮົາຈະໄດ້ກາຍເປັນຄວາມຈິງອັນເປັນເອກະພາບ

ຊຶ່ງຈະສະແດງລັກສະນະ ແຫ່ງສາມັກຄີໃຫ້ເປັນທີ່ປະຈັກ ແກ່ໂລກ ພຣະອົງຄືພຣະຜູ້ຊົງກະລຸນາພຣະຜູ້ຊົງປານີ ພຣະຜູ້ຊົງປະທານພອນ ພຣະຜູ້ຍິ່ງໃຫຍ່ ພຣະຜູ້ຊົງເມດຕາ ພຣະຜູ້ຊົງພາລານຸພາບ.

*– ພຣະອັບດຸລບາຮາ.*

## ໄຫວ້ວອນສຳຫຼັບເດັກ

ຂ້າແດ່ພຣະຜູ້ເປັນເຈົ້າ ໂປຣດຊົງລ້ຽງດູເດັກນ້ອຍຜູ້ນີ້ໄວ້ໃນອ້ອມອົກແຫ່ງຄວາມຮັກ ຂອງພຣະອົງ ຂໍຈົ່ງໃຫ້ເຂົາໄດ້ດື່ມນ້ຳນົມຈາກຫົວອົກ ແຫ່ງຄວາມກະລຸນາຂອງພຣະອົງ ໂປຣດເພາະປູກພືກສາຊາດຕົ້ນນີ້ທີ່ຍັງໃໝ່ສົດໃນສວນກຸຫຼາບແຫ່ງຄວາມຮັກຂອງພຣະອົງ ຂໍພຣະອົງຊົງຊ່ວຍໃຫ້ຕົ້ນໄມ້ນີ້ ຈະເລີນດ້ວຍສາຍຝົນແຫ່ງພຣະບາລະມີຂອງພຣະອົງ ໂປຣດເສກສັນໃຫ້ເຂົາເປັນເດັກໃນອານາຈັກແຫ່ງຄຸນທຳ ຂໍຊົງນຳເຂົາໄປສູ່ອານາຈັກແຫ່ງແດນສວງສະຫວັນຂອງພຣະອົງ ພຣະອົງຄືພຣະຜູ້ຊົງອຳນາດຊົງພຣະກະລຸນາ ຊົງເປັນພຣະຜູ້ປະທານພອນຊົງເມດຕາ ຊົງເປັນເຈົ້າແຫ່ງບຸນບາລະມີອັນລົ້ນເຫຼືອ.

*– ພຣະອັບດຸລບາຮາ.*

ຂ້າແດ່ພຣະ ຜູ້ເປັນເຈົ້າ ຂໍຊົງອົບຮົມເດັກ ເຫຼົ່ານີ້ ເດັກທັງຫຼາຍຄືພືກສາຊາດ ທີ່ຈະເລີນໃຫຍ່ສູງ ໃນສວນພາກໄມ້ຂອງພຣະອົງ ເຂົາເຫຼົ່ານັ້ນຄື ດອກໄມ້ ປະດັບປະດາ ທົ່ງຫຍ້າ ແລະ ເປັນດອກກຸຫຼາບ ໃນສວນອຸດທະຍານຂອງພຣະອົງ ໂຜດຊົງປະທານ ນ້ຳຝົນຫຼໍ່ລ້ຽງພວກເຂົາໂຜດດົນບັນດານໃຫ້ແສງສະຫວ່າງ ແຫ່ງສັດຈະທຳສ່ອງເຖິງພວກເຂົາ ດ້ວຍຄວາມຮັກແພງ ຂອງພຣະອົງ ຂໍໃຫ້ກະແສພຣະບາລະມີຂອງພຣະອົງ ພັດພາໃຫ້ເຂົາມີຄວາມສົດຊື່ນເບີກບານ ເພື່ອເຂົາ ຈະໄດ້ຮັບການ ອົບຮົມຈະເລີນໃຫຍ່ສູງ ແລະ ປະກົດຄວາມງາມອັນລ້ຳເລີດ ພຣະອົງຄືພຣະຜູ້ໃຫ້ ພຣະອົງ ເຕັມປ່ຽມໄປດ້ວຍ ຄວາມເມດຕາກະລຸນາ.

– *ພຣະອັບດຸລບາຮາ.*

## ໄຫວ້ວອນສຳຫຼັບເຍົາວະຊົນ

ຂ້າແດ່ພຣະຜູ້ເປັນເຈົ້າໂຜດປະທານແສງສະຫວ່າງໃຫ້ແກ່ເຍົາວະຊົນນີ້ໂຜດປະທານຄວາມເຂັ້ມແຂງໃຫ້ແກ່ຜູ້ທີ່ອ່ອນແອ ໂຜດປະທານຄວາມຮູ້ ແລະ ເພີ່ມພູນຄວາມ

ສາມາດ ຄວາມເຂັ້ມແຂງໃຫ້ແກ່ພວກເຂົາທຸກອາຣຸນຮຸ່ງ ຂຶ້ນເພື່ອເຂົາຈະໄດ້ຮັບຄວາມຄຸ້ມຄອງ ແລະ ພໍານັກຢູ່ໃນກໍາແພງເພັດຂອງພຣະອົງ ແລະ ຫຼີກເວັ້ນ ຈາກບາບກໍາທັງມວນ ແລະ ຮັບໃຊ້ພຣະສາສະໜາຂອງພຣະອົງ ດ້ວຍການຊັກຈູງຜູ້ທີ່ຫຼົງທາງຜິດ ແລະ ນໍາທາງ ແກ່ຜູ້ທີ່ຍາກແຄ້ນ ຫຼື ອ່ອນແອດ້ວຍການຊ່ວຍເຫຼືອຜູ້ທີ່ຕົກຢູ່ໃນໂຊກຊາຕາກໍາ ແລະ ຊ່ວຍຜູ້ທີ່ ຢູ່ໃນພັນທະນາການ ຈາກກິເລດທັງມວນໃຫ້ເປັນອິດສະລະດ້ວຍການປຸກຜູ້ທີ່ຫຼົງຫຼັບໃຫຼໃຫ້ຕື່ນຂຶ້ນມາຮັບພອນອັນປະເສີດພົບພໍ້ກັບຄວາມສຸກທີ່ໄດ້ລະລຶກ ແລະ ສັນລະເສີນພຣະອົງ ພຣະອົງຄືພຣະຜູ້ຊົງພາລາບຸພາບ ພຣະຜູ້ຊົງພຣະປິຊາຍານ.

– *ພຣະອັບດຸລບາຮາ.*

## ໄຫວ້ວອນສໍາຫຼັບເດັກນ້ອຍ

ຂ້າແດ່ພຣະຜູ້ເປັນເຈົ້າ ໂຜດນໍາທາງໃຫ້ແກ່ຂ້າພຣະອົງ ໂຜດຄຸ້ມຄອງຂ້າພຣະອົງ ໂຜດປະທານຄວາມສະຫວ່າງສະໄຫວ ໃຫ້ແກ່ດວງປະທີບໃນຫົວໃຈຂອງຂ້າພຣະອົງ ແລະ ໂຜດດົນບັນດານໃຫ້ຂ້າພຣະອົງເປັນດວງດາວ

ທີ່ເສາະໃສ ພຣະອົງຄືພຣະຜູ້ຊົງອານຸພາບ ຊົງພາລານຸພາບ.

*ພຣະອັບດຸລບາຮາ.*

## ໄຫວ້ວອນສຳຫຼັບການບໍລິຈາກໃຫ້ກອງທຶນສາສະໜາ

ບັນດາຍາດມິດຂອງພຣະຜູ້ເປັນເຈົ້າ ຄວນບໍລິຈາກໃຫ້ແກ່ກອງທຶນຂອງສາສະໜາ ໃຫ້ຫຼາຍທີ່ສຸດເທົ່າທີ່ຈະປະຕິບັດໄດ້ ແມ່ນວ່າເມື່ອບໍລິຈາກເຕັມຕາມກຳລັງຊັບແລ້ວ ຈະເປັນເງິນພຽງເລັກນ້ອຍກໍ່ຕາມ ພຣະຜູ້ເປັນເຈົ້າບໍ່ເຄີຍໃຫ້ເຮົາແບກພາລະເກີນຂອບເຂດ ຄວາມສາມາດຂອງແຕ່ລະຄົນ ເງິນທີ່ບໍລິຈາກນັ້ນ ຈະຕ້ອງເປັນຊັບສິນກອງທຶນສາສະໜາ ແລະ ໄດ້ມາຈາກຊາວສາສະນິກກະຊົນບາຮາຍ.

ດູກ່ອນເພື່ອນມິດທັງມວນຂອງພຣະຜູ້ເປັນເຈົ້າ ຈົ່ງເຊື່ອໝັ້ນໄດ້ວ່າ ບຸນກຸສົນຈາກການບໍລິການຈາກນີ້ ຈະຍັງໃຫ້ການກະເສດຕະກຳ ອຸດສາຫະກຳ ແລະ ການຄ້າຂາຍຂອງເຈົ້າ ໄດ້ຮັບພຣະພອນບັງເກີດ ເປັນຜົນຕອບແທນນັບຮ້ອຍເທົ່າພັນທະວີ ໃຫ້ເຈົ້າໄດ້ຮັບທັງຊັບສິນບັດ ແລະ ພຣະພອນເປັນຂອງຂວັນ ໃຜກໍ່ຕາມທີ່ກະ

ທຳຄຸນຄວາມດີພຽງປະການດຽວ ຍ່ອມໄດ້ຮັບຜົນຕອບ
ແທນເປັນລາງວັນ ເຖິງສິບເທົ່າຂອງຄວາມດີ ທີໄດ້
ບຳເພັນກຸສົນແລ້ວບໍ່ຕ້ອງສົງໄສເລີຍວ່າ ພຣະຜູ້ຊົງກຳ
ລັງດຳລົງຢູ່ຈະປະທານລາງວັນ ແລະ ພຣະພອນຢ່າງ
ມະຫາສານ ໃຫ້ແກ່ສາສະນິກກະຊົນ ຜູ້ບໍລິຈາກຄວາມ
ຮັ່ງມີຂອງຕົນ ໃນວິຖີທາງກອງການກຸສົນຂອງພຣະອົງ.

ຂ້າແດ່ພຣະຜູ້ເປັນເຈົ້າ ຂອງຂ້າພະອົງ ຂໍຊົງໂຜດ
ປະທານແສງສະຫວ່າງ ໃຫ້ແກ່ໃບໜ້າຂອງຜູ້ທີ່ຮັກພຣະ
ອົງຢ່າງແທ້ຈິງ ຂໍໃຫ້ເທບພະທິດາ ແຫ່ງໄຊຊະນະອັນ
ທ່ຽງແທ້ອຸປະຖັມຄ່າຊູເຂົາ ໃຫ້ຂາຂອງເຂົາເດີນຢ່າງ
ໝັ້ນຄົງແນ່ນແນ່ຢູ່ເທິງຖະນົນຫົນທາງ ຊື່ຕົງຂອງພຣະ
ອົງ ແລະ ດ້ວຍພຣະມະຫາກະລຸນາທິຄຸນອັນມີມາແຕ່ບຸ
ຮານນະການຂອງພຣະອົງ ຂໍຊົງເປີດປະຕູແຫ່ງພຣະ
ພອນໃຫ້ປະກົດແກ່ເຂົາເຫຼົ່ານັ້ນ ເພາະວ່າເຂົາເຫຼົ່ານັ້ນ
ກຳລັງໃຊ້ຈ່າຍຊັບສິນ ທີ່ພຣະອົງຊົງປະທານໃຫ້ ໃນວິ
ຖີທຳຂອງພຣະອົງ ເພື່ອໃຊ້ປົກປັກຮັກສາ ສາສະໜາ
ຂອງພຣະອົງ ເພື່ອເປັນການສະແດງອອກ ໃນນ້ຳໃຈ
ເສັຽສະລະໃນຄວາມລະນຶກເຖິງພຣະອົງ ແລະ ບຳເພັນ

ກລັບຈາກຊີວິດຈິດໃຈໃນຄວາມຮັກພຣະອົງ ເຂົາບໍ່ໄດ້ຍຶດຄອງສົມບັດທັງຫຼາຍທີ່ມີຢູ່ ແຕ່ສະລະໃຫ້ເພື່ອເປັນເຄື່ອງບູຊາຄວາມງາມຂອງພຣະອົງ ເພື່ອຄົ້ນຫາວິທີທາງທຳ ໃຫ້ພະອົງມີຄວາມຍິນດີ.

ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງດົນບັນດານໃຫ້ເຂົາໄດ້ຮັບສ່ວນແບ່ງຢ່າງມາກມາຍ ໄດ້ຮັບຊົດເຊີຍຕາມພຣະຣາຊະກຳນົດ ແລະ ໄດ້ຮັບລາງວັນຢ່າງແນ່ນອນ.

ແທ້ຈິງແລ້ວພຣະອົງຄືພຣະຜູ້ຄ້ຳຊູ ພຣະຜູ້ຊົງເມດຕາກະລຸນາ ພຣະຜູ້ຊົງປະທານພອນຕະຫຼອດກາລະນາ.

– ພຣະອັບດຸລບາຣາ.

24/VII

## ໄຫວ້ວອນໃຫ້ແກ່ດວງວິນຍານຂອງຜູ້ທີ່ເຖິງແກ່ກຳ

ໂອ ຂ້າແດ່ພຣະຜູ້ເປັນເຈົ້າ ຜູ້ທີ່ລ່ວງລັບໄປແລ້ວເຂົາຜູ້ນັ້ນເປັນຄົນຮັບໃຊ້ຂອງພຣະອົງ ເປັນບຸດຫຼານຜູ້ທີ່ຮັບໃຊ້ ຊຶ່ງມີຄວາມສັດທາເຫຼື້ອມໃສໃນພຣະອົງ ແລະໃນສັນຍາລັກຂອງພຣະອົງ ຜູ້ທີ່ເຖິງແກ່ກຳໄປແລ້ວ ຄົນນັ້ນກຳລັງມຸ່ງຫາພຣະອົງ ດ້ວຍນະໂມສຳນຶກທີ່ໄດ້ລະຄຸນ

ທຸກສິ່ງທຸກຢ່າງ ນອກຈາກພຣະອົງ ແທ້ຈິງແລ້ວພຣະອົງຄືພຣະຜູ້ຊົງສະແດງຄວາມເມດຕາອັນຍິ່ງໃຫຍ່ເໜືອຄວາມເມດຕາອັນໃດໆ

ຂ້າແດ່ພຣະຜູ້ຊົງປະທານອະໄພຍະໂທດ ພຣະຜູ້ຊົງສໍາລະບາບກໍາຂອງມະນຸດ ຂໍພຣະອົງຊົງປະຕິບັດຕໍ່ຜູ້ທີ່ລະຈາກໂລກນີ້ໄປແລ້ວ ໃຫ້ແກ່ເຂົາຜູ້ນີ້ຕາມລະດັບນາດຕາການ ທີ່ອົງການສວງສະຫວັນ ແຫ່ງບຸນຍະບາລະມີ ແລະມະຫາສະມຸດແຫ່ງພຣະກະລຸນາທິຄຸນຂອງພຣະອົງ ໄດ້ກໍານົດຄວາມເໝາະສົມໄວ້ ຂໍຊົງໂປດອະນຸຍາດໃຫ້ເຂົາໄດ້ເຂົ້າສູ່ ລາຊະສໍານັກແຫ່ງ ຄວາມເມດຕາອັນຮຸ່ງເຮືອງ ຊຶ່ງສະຖິດຢູ່ຕໍ່ໜ້າເບື້ອງບົນຂອງພົ້ນພິພົບ ແລະສວງສະຫວັນ ບໍ່ມີພຣະຜູ້ເປັນເຈົ້າອື່ນໃດອີກນອກຈາກພຣະອົງພຣະຜູ້ຊົງອະໄພຍະໂທດ ພຣະຜູ້ຊົງເມດຕາ.

ຈາກນັ້ນ ຂໍໃຫ້ອະທິຖານຄໍາວ່າ

"ອາລາໂຮອັບຣາ" 6 ຄັ້ງ ແລ້ວຈຶ່ງອະທິຖານປະໂຍກຕໍ່ໄປນີ້ ປະໂຍກລະ 19 ຄັ້ງ

– ເຮົາທັງຫຼາຍບູຊາພຣະຜູ້ເປັນເຈົ້າ ດ້ວຍຄວາມສັດທາຢ່າງແທ້ຈິງ.

– ເຮົາທັງຫຼາຍ ນ້ອມຄາລະວະຕໍ່ໜ້າພຣະພັກ ຂອງພຣະຜູ້ເປັນເຈົ້າ ດ້ວຍຄວາມຈິງໃຈ.

– ເຮົາທັງຫຼາຍອຸດທິດຖວາຍຕົນຕໍ່ພຣະຜູ້ເປັນເຈົ້າ ດ້ວຍຄວາມຈົ່ງຮັກພັກດີຢ່າງແທ້ຈິງ.

– ເຮົາທັງຫຼາຍຂໍສັນລະເສີນພຣະຄຸນ ຂອງພຣະຜູ້ເປັນເຈົ້າ ດ້ວຍໃຈສັກກະລະບູຊາ.

– ເຮົາທັງຫຼາຍ ຂໍຂອບພຣະໄທ ພຣະຜູ້ເປັນເຈົ້າ ດ້ວຍສໍານຶກທີ່ເຕັມປ່ຽມ ດ້ວຍຄວາມກະຕັນຍູກະຕະເວທີ ຮູ້ບຸນຄຸນ.

– ເຮົາທັງຫຼາຍມີຂັ້ນຕິທໍາ ຕໍ່ພຣະຜູ້ເປັນເຈົ້າຢ່າງແທ້ຈິງ.

*– ພຣະບາຣາອຸລລາທ໌.*

ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າແດ່ພຣະຜູ້ຊົງໃຫ້ອະໄພແກ່ບາບທັງປວງ ພຣະຜູ້ຊົງປະທານຂ້ວນລາບ ພຣະຜູ້ຊົງກໍາຈັດຄວາມທຸກຍາກທັງມວນ.

ຂ້າພຣະອົງຂໍກາບໄຫວ້ວິງວອນ ພຣະອົງໃຫ້ຊົງອະໄພຄວາມບາບຂອງຜູ້ລ່ວງລັບໄປແລ້ວ ແລະບັນລຸສູ່ໂລກ

ແຫ່ງດວງວິນຍານ.

ຂ້າແດ່ພຣະຜູ້ເປັນເຈົ້າ ໂຜດຊ່ວຍໃຫ້ເຂົາເປັນຜູ້ບໍລິສຸດ ພົ້ນຈາກອະກຸສົນກຳ ໂຜດກຳຈັດຄວາມເສົ້າໂສກຂອງເຂົາ ໂຜດປ່ຽນແປງຄວາມມືດ ໃຫ້ເປັນແສງສະຫວ່າງ ໂຜດນຳທາງໃຫ້ເຂົາເຂົ້າໄປໃນອຸດທິຍານແຫ່ງຄວາມສຸກ ແລະ ສຳລະລ້າງເຂົາດ້ວຍນ້ຳບໍລິສຸດ ໂຜດດົນບັນດານໃຫ້ເຂົາ ນອງເຕັມຄວາມສະງ່າງາມ ຂອງພຣະອົງ ຊຶ່ງສະຖິດຢູ່ບະທີ່ອັນສູງສຸດ.

*– ພຣະອັບດຸລບາຮາ.*

## ໄຫວ້ວອນໂດຍສະເພາະ ບາງບົດ

ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຄວາມຮຸ່ງເຮືອງຈົ່ງມີແດ່ພຣະອົງຜູ້ຊົງສະແດງຄວາມຮັກໃຫ້ເປັນທີ່ຮູ້ຄວາມຈິງແກ່ຊາດມະນຸດ ຂໍຄວາມສັນລະເສີນຈົ່ງມີແດ່ພຣະຜູ້ຊົງເປັນຊີວິດຈິດໃຈ ຂອງພວກເຮົາ ພຣະຜູ້ເປັນແສງພະທິບດວງທຳຂອງພວກເຮົາ ຂໍຊົງໂຜດນຳຄົນຮັບໃຊ້ເຫຼົ່ານີ້ ໄປໃນວິຖີທຳຂອງພຣະອົງ ໃຫ້ມະໂນທຳຂອງເຮົາເຕັມປ່ຽມດ້ວຍຄວາມລະລຶກເຖິງແຕ່ພຣະອົງ ຂໍໃຫ້ພວກ

ເຮົາຫຼຸດພົ້ນເປັນອິດສະລະ ຈາກທຸກສິ່ງທຸກຢ່າງ ນອກ
ຈາກພຣະອົງ

ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງໂຜດອົບຮົມຄວາມເປັນ
ເອກະພາບ ໃຫ້ແກ່ພວກເຮົາທັງຫຼາຍ ຂໍໃຫ້ພວກເຮົາໄດ້
ຮູ້ແຈ້ງເຫັນຈິງ ໃນນະໂນພາບອັນຍິ່ງໃຫຍ່ຂອງພຣະອົງ
ເພື່ອວ່າ ເຮົາຈະບໍ່ໄດ້ເຫັນຜູ້ໃດອີກ ນອກຈາກພຣະອົງ
ພຣະອົງຄືພຣະຜູ້ຊົງກະລຸນາ ພຣະຜູ້ຊົງປະທານຄວາມ
ເມດຕາ.

ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງຈູດເພີງແຫ່ງຄວາມ
ຮັກຂອງພຣະອົງ ໃນຫົວໃຈຂອງທຸກໆຄົນທີ່ພຣະອົງຊົງ
ຮັກໃຫ້ເພີງນີ້ ຈົ່ງເຜົາຄວາມຄິດອັນປາສາຈາກສາລະ
ທີ່ກ່ຽວໂຍງມາເຖິງພຣະອົງ.

ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງເຜີຍຄວາມຍິ່ງຍົງຄົງ
ປະພັນອັນສູງສົ່ງ ເປັນອະນະຕະໃນສວນທີ່ຜ່ານມາແລະ
ກຳລັງທີ່ຈະເປັນໄປໃນອະນາຄົດຂອງພຣະອົງ ໃຫ້ພວກ
ເຮົາໄດ້ຮູ້ວ່າ ນອກເໜືອຈາກພຣະອົງແລ້ວ ບໍ່ມີພຣະຜູ້
ເປັນເຈົ້າອື່ນໃດ ເຮົາທັງຫຼາຍພົບພໍ້ຄວາມສະຫງົບສຸກ

ແລະ ຄວາມເຂັ້ມແຂງພ່າພ້ອມຢູ່ກັບພຣະອົງ.

– *ພຣະບາຣາອຸລລາຫ.*

## *ໄຫວ້ວອນເພື່ອເອກະພາບ*

ໂອ ຂ້າແດ່ພຣະຜູ້ເປັນເຈົ້າ ໂອ ຂ້າແດ່ພຣະຜູ້ເປັນເຈົ້າຈົ່ງຊົງຮວບຮວມຈິດໃຈຄົນຮັບໃຊ້ ຂອງພຣະອົງໃຫ້ເປັນເອກະພາບ ຂໍຊົງເປີດເຜີຍພຣະປະສົງອັນຍິ່ງໃຫຍ່ຂອງພຣະອົງ ແກ່ພວກເຂົາຂໍໃຫ້ພວກເຂົາປະຕິບັດຕາມພຣະປະສົງຂອງພຣະອົງ ແລະຍຶດໝັ້ນໃນພຣະບັດຍັດຂອງພຣະອົງ ຂ້າແດ່ພຣະຜູ້ເປັນເຈົ້າ ໂຜດຊົງຊ່ວຍເຫຼືອເກື້ອກູນຄວາມພະຍາຍາມ ແລະ ປະທານກຳລັງເພື່ອເຂົາຈະໄດ້ຮັບໃຊ້ພຣະອົງ ຂ້າແດ່ພຣະຜູ້ເປັນເຈົ້າ ໂຜດຢ່າໄດ້ລະຖິ້ມພວກເຂົາເຫຼົ່ານີ້ໄວ້ຕາມລຳພັງ ຂໍຊົງນຳທາງພວກເຂົາດ້ວຍແສງສະຫວ່າງ ແຫ່ງຄວາມຮອບຮູ້ຂອງພຣະອົງ ແທ້ຈິງແລ້ວ ພຣະອົງຄືພຣະຜູ້ຊ່ວຍແລະເປັນພຣະຜູ້ເປັນເຈົ້າຂອງພວກເຂົາ.

– *ພຣະບາຣາອຸລລາຫ.*

ຈົ່ງເວົ໊າວ່າ ຂ້າແດ່ພຣະຜູ້ເປັນເຈົ໊າ ພຣະຜູ້ຊົງເປັນເຈົ໊າຂອງຂ້າພຣະອົງ ຂໍພຣະອົງຊົງຕົກແຕ່ງສີສະຂອງຂ້າພຣະອົງ ດ້ວຍມົງກຸດແຫ່ງຄວາມຍຸດຕິທຳ ຂໍຊົງປະດັບຂະນັບຫູຂອງຂ້າພຣະອົງ ດ້ວຍເຄື່ອງຊົງພິນິດແຫ່ງພິຈາລະນາ ພຣະອົງຄອບຄອງພອນສະຫວັນ ແລະ ບຸນຍາບາລານີຢ່າງແທ້ຈິງ.

*- ພຣະບາຣາອຸລລາຫ໌.*

ໂອ ຂ້າແດ່ພຣະຜູ້ເປັນເຈົ໊າ ຂ້າພຣະອົງຕັ້ງໃຈອະທິຖານ ຂໍພຣະບານອັນສັກສິດຂອງພຣະອົງຊົງຊ່ວຍຂ້າພຣະອົງໃນການປະຕິບັດສາສະນະກິດຊົງມອບໝາຍຄືນໃຊ້ເຫຼົ່ານີ໊ໃຫ້ບັນລຸສູ່ຄວາມຈະເລີນ ໃຫ້ກຸສົນນີ໊ຈົ່ງດົນບັນດານໃຫ້ບ້ານເມືອງຂອງພຣະອົງ ກ້າວຂຶ໊ນສູ່ຄວາມຮຸ່ງເຮືອງ ພຣະອົງຊົງອຳນາດເໜືອທຸກສັບພະສິ່ງທັງມວນ.

*- ພຣະບາຣາອຸລລາຫ໌.*

ໂອ ຂ້າແດ່ພຣະຜູ້ເປັນເຈົ໊າ ຂໍໃຫ້ແສງແຫ່ງສາມັກຄີທຳຂອງພຣະອົງ ຈົ່ງເຜີຍອອກມາຄອບຄຸມໂລກໄວ້ຂໍ

ໃຫ້ການແຕ່ງອານາຈັກນີ້ ເປັນຂອງພຣະຜູ້ເປັນເຈົ້າຈົ່ງປະທັບເໜືອໜ້າຜາກຂອງມະນຸດທຸກຄົນ.

*–ພຣະບາຣາອຸລລາຫ.*

## ໄຫວ້ວອນກຳຈັດຄວາມຫຍຸ້ງຍາກ

ມີຜູ້ກຳຈັດຄວາມຫຍຸ້ງຍາກອື່ນໃດອີກຫຼື ນອກຈາກພຣະຜູ້ເປັນເຈົ້າ ຂໍຄວາມສັນລະເສີນຈົ່ງເປັນຂອງພຣະເປັນເຈົ້າ ພຣະອົງຄືພຣະຜູ້ເປັນເຈົ້າ ທຸກຄົນເປັນຄົນຮັບໃຊ້ຂອງພຣະອົງ ແລະ ທຸກຄົນຢູ່ໃຕ້ພຣະບາລະມີຂອງພຣະອົງ.

–ພຣະ ບອບ.

## ໄຫວ້ວອນເພື່ອພັດທະນາຈິດໃຈ

ໂອ ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງທຳໃຫ້ຈິດໃຈຂອງຂ້າພຣະອົງສົດໃສ ແລະ ເບີກບານ ຂໍຊົງທຳໃຫ້ຈິດໃຈຂອງຂ້າພຣະອົງບໍລິສຸດ ຂໍຊົງປະທານກຳລັງຄວາມສາມາດໃຫ້ແກ່ຂ້າພຣະອົງ ຂ້າພຣະອົງຂໍມອບວຽກງານທຸກຢ່າງໄວ້ໃນພະຫັດຂອງພຣະອົງ ພຣະອົງຊົງເປັນຜູ້ນຳ

ທາງ ແລະ ເປັນທີ່ເພິ່ງຂອງຂ້າພຣະອົງ ຂ້າພຣະອົງຈະບໍ່ມີຄວາມໂສກເສົ້າເສຍໃຈຕໍ່ໄປອີກແລ້ວ ຂ້າພຣະອົງຈະມີຄວາມສຸກແລະລື່ນເລີງຕະຫຼອດໄປ ໂອ ! ພຣະຜູ້ເປັນເຈົ້າ ຂ້າພຣະອົງຈະບໍ່ເຕັມໄປດ້ວຍຄວາມໂລບມາກ ແລະ ຈະບໍ່ໃຫ້ຄວາມຫຍຸ້ງຍາກມາລົບກວນຂ້າອີກ ຂ້າພຣະອົງຈະບໍ່ຢູ່ໃນບັນຍາກາດອັນຂະມຸກຂະມົວ ແຫ່ງຊີວິດໂອພຣະຜູ້ເປັນເຈົ້າພຣະອົງຊົງມີເມດຕາຈິດຕໍ່ຂ້າຍິ່ງກ່ວາຂ້າພຣະອົງມີຕໍ່ຂ້າພຣະອົງເອງ ໂອພຣະຜູ້ເປັນເຈົ້າຂ້າພຣະອົງຂໍມອບກາຍຖວາຍຊີວິດນີ້ແດ່ພຣະອົງ

*ພຣະອັບດຸລບາຣາ.*

ໂອ ຂ້າແດ່ພຣະຜູ້ເປັນເຈົ້າ ພຣະຜູ້ເປັນທີ່ຮັກພຣະຜູ້ເປັນຄວາມປາຖະໜາຂອງຂ້າພຣະອົງ ຂໍພຣະອົງຊົງເປັນມິດໃນຍາມທີ່ຂ້າພຣະອົງຢູ່ຕາມລຳພັງ ຂໍຊົງເປັນທີ່ເພິ່ງຍາມທີ່ຂ້າພຣະອົງ ພັດພາກຖິ່ນຖານ ຂໍຊົງປົດເປືອງຄວາມໂສກເສົ້າເສຍໃຈຂອງຂ້າພຣະອົງ ຂໍຊົງດົນບັນດາໃຫ້ຂ້າພຣະອົງ ອຸທິດຕົນ ໃຫ້ແກ່ຄວາມງາມຂອງພຣະອົງໂດຍດຶງຂ້າພຣະອົງອອກຈາກສິ່ງທີ່ບໍ່ແມ່ນພຣະອົງເຮັດໃຫ້ຂ້າພຣະອົງສົນໃຈກິ່ນຫອມຫວານແຫ່ງ

ຄວາມສັກສິດ ຂໍໃຫ້ຂ້າພຣະອົງ ແລະ ບັນດາຜູ້ທີ່ຫຼີກເວັ້ນອອກຈາກທຸກສິ່ງ ທຸກຢ່າງນອກຈາກພຣະອົງ ບັນດາຜູ້ທີ່ເຝົ້າລໍຄອຍຮັບໃຊ້ໄດ້ພົ້ນທໍລະນິອັນສັກສິດ ແລະ ຜູ້ທີ່ພ້ອມຈະທໍາງານໃຫ້ສາສະໜາ ໄດ້ຮ່ວມສະໂມສອນກັບໃນອານາຈັກຂອງພຣະອົງ ຂໍຊົງຊ່ວຍເຫຼືອໃຫ້ຂ້າພຣະອົງຜູ້ໜຶ່ງຢູ່ໃນບັນດາຜູ້ຮັບໃຊ້ທີ່ພຣະອົງຊົງໂສມນະນັດພຣະອົງຊົງພຣະກະລຸນາ ຊົງພຣະເມດຕາຢ່າງແທ້ຈິງ.

*— ພຣະອັບດຸລບາຣາ.*

ໂອ ຂ້າແດ່ພຣະຜູ້ເປັນເຈົ້າ ຂໍພຣະອົງຊົງຊ່ວຍໃຫ້ຄົນທີ່ພຣະອົງຮັກໃຄ່ ມີຄວາມເຊື່ອໝັ້ນໃນສາສະໜາໃຫ້ເຂົາເດີນໃນບາດວິທີທາງ ຂອງພຣະອົງ ໃຫ້ມີຈິດຍຶດໝັ້ນຢູ່ໃນພຣະທໍາຂອງພຣະອົງ ໂດຍປະທານຄວາມເມດຕາໃຫ້ແກ່ເຂົາ ເພື່ອເຂົາຈະໄດ້ຕັດກິເລດ ແລະ ຫຼີກເວັ້ນຄວາມເຫັນແກ່ຕົວ ແລະ ເດີນຕາມແສງແຫ່ງພຣະທໍາລະຫວັນ ພຣະອົງຄືພຣະຜູ້ຊົງພາລານຸພາບ ພຣະຜູ້ຊົງພຣະມະຫາກະລຸນາ ພຣະຜູ້ຊົງດໍາລົງຢູ່ດ້ວຍພຣະອົງເອງ ພຣະຜູ້ປະທານພອນ ພຣະຜູ້ຊົງເມດຕາຄວາມ

ຮັກແພງ ພຣະຜູ້ຊົງມະຫິດທານຸພາບ ພຣະຜູ້ຊົງເມດ
ຕາປານີ.

*- ພຣະອັບດຸລບາຮາ.*

ໂອ ຂ້າແດ່ພຣະຜູ້ເປັນເຈົ້າ ໂຜດສົງສານພວກເຮົາ ໂຜດປະທານຄວາມເມດຕາແກ່ພວກເຮົາ ພວກເຮົາຍາກຈົນ ໂຜດແບ່ງສ່ວນຄວາມອຸດົມຮັ່ງມີຈາກວັງມະຫາສະມຸດແຫ່ງຄັງສົມບັດຂອງພຣະອົງ ໃຫ້ແກ່ ພວກເຮົາພວກເຮົາຂັດສົນ ໂຜດປະທານສິ່ງທີ່ພວກເຮົາຕ້ອງການພວກເຮົາຕົກຕໍ່າ ໂຜດເຮັດໃຫ້ ພວກເຮົາຮຸ່ງເຮືອງ ຝູງສັກກຸນາບິນເຈີດຈ້າວຢູ່ໃນທ້ອງຟ້າຕະຫຼອດ ຈົນສັດທີ່ອາໃສຢູ່ໃນທົ່ງຫຍ້າ ຕ່າງກໍໄດ້ຮັບ ອາຫານ ເປັນປະຈໍາທຸກວັນຈາກພຣະອົງ ຕ່າງມີສ່ວນໄດ້ຮັບ ຄວາມເອົາໃຈໃສ່ດູແລແລະຄວາມເມດຕາປານີຈາກພຣະອົງ.

ໂຜດຢ່າຊົງກົດຂວາງ ບໍ່ໃຫ້ຜູ້ທີ່ອ່ອນແອ ຜູ້ນີ້ໄດ້ຮັບຄວາມເມດຕາ ຈາກພຣະອົງ ແລະ ດ້ວຍພຣະຫິດທານຸພາບຂອງພຣະອົງ ຂໍຊົງໂຜດປະທານ ຄວາມກະລຸນາຜູ້ທີ່ຊ່ວຍເຫຼືອຕົນເອງບໍ່ໄດ້ ຜູ້ນີ້ດ້ວຍ, ຂໍຊົງໂຜດປະທານ

ອາຫານຕະຫຼອດຈົນເພີ່ມທະວີ ທີ່ຈຳເປັນ ແກ່ການຄອງຊີບແກ່ເຮົາເປັນປະຈຳທຸກວັນເພື່ອບໍ່ໃຫ້ເຮົາຫັນໄປເພິ່ງສິ່ງທີ່ບໍ່ແມ່ນພຣະອົງ ຈະໄດ້ຕິດຕໍ່ກັບພຣະອົງຈະໄດ້ເດີນໃນວິທີທາງຂອງພຣະອົງ ແລະ ຈະໄດ້ປະກາດຄວາມເລິກລັບຂອງພຣະອົງ ພຣະອົງ ຄືພະຜູ້ຊົງພາລາບຸພາບ ພຣະຜູ້ຊົງເມດຕາປານີ ພຣະຜູ້ຊົງ ສະໜອງຄວາມຕ້ອງການຂອງມະນຸດທັງປວງ.

– *ພຣະອັບດຸລບາຣາ.*

ໂອ ຂ້າແດ່ພຣະຜູ້ເປັນເຈົ້າ ພວກເຮົາທັງຫຼາຍ ອ່ອນແອ ຂໍຊົງປະທານຄວາມເຂັ້ມແຂງ ໃຫ້ແກ່ພວກເຮົາ ຂ້າແດ່ພຣະຜູ້ເປັນເຈົ້າ ພວກເຮົາ ເປັນຄົນໂງ່ງ່າວ ໂຜດຊ່ວຍໃຫ້ພວກເຮົາຮອບຮູ້ ຂ້າແດ່ພຣະຜູ້ເປັນເຈົ້າ ພວກເຮົາຍາກຈົນ ໂຜດປະທານຄວາມຮັ່ງມີ ໃຫ້ແກ່ພວກເຮົາ ຂ້າແດ່ພຣະຜູ້ເປັນເຈົ້າ ພວກເຮົາເໝືອນດັ່ງ ຄົນທີ່ຕາຍແລ້ວ ໂຜດພື້ນຄືນສະຕິ ໃຫ້ແກ່ພວກເຮົາ ຂ້າແດ່ພະຜູ້ເປັນເຈົ້າ ພວກເຮົາ ຄືຄົນຕ່ຳຕ້ອຍ ຂໍເຮັດໃຫ້ພວກເຮົາຈົ່ງຮຸ່ງເຮືອງຢູ່ໃນອານາຈັກຂອງພະອົງ ຂ້າແດ່ພຣະ

ຜູ້ເປັນເຈົ້າ ຫາກພຣະອົງ ຊົງຊ່ວຍເຫຼືອພວກເຮົາກໍ່ຈະ ກາຍເປັນດວງດາວ ທີ່ສ່ອງປະກາຍແສງ ລັດສະໝີ ຫາກ ພຣະອົງບໍ່ຊົງຊ່ວຍເຫຼືອ ເຮົາກໍ່ຈະຕ້ອງຕົກຕ່ຳ ລົງສູ່ລະ ດັບໃຕ້ພື້ນທໍລະນີ ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງປະທານ ຄວາມເຂັ້ມແຂງ ໃຫ້ແກ່ເຮົາ ຂ້າແດ່ ພຣະຜູ້ເປັນເຈົ້າ ໂປດປະທານໄຊຊະນະ ໃຫ້ແກ່ເຮົາ ຂ້າແດ່ ພຣະຜູ້ເປັນ ເຈົ້າ ຂໍຊົງຊ່ວຍໃຫ້ເຮົາ ຊະນະຕົນເອງ ໂປດຊ່ວຍ ໃຫ້ ເຮົາຂົ່ມຄວາມປາຖະໜາ ທາງໂລກີອະວິໄສ ຂ້າແດ່ພຣະ ຜູ້ເປັນເຈົ້າໂປດປົດປ່ອຍເຮົາ ອອກຈາກພັນທະນາການ ແຫ່ງວັດຖຸທາງໂລກ ຂ້າແດ່ ພຣະຜູ້ເປັນເຈົ້າ ໂປດຟື້ນ ຄືນຊີວິດເຮົາດ້ວຍລົມຫາຍໃຈແຫ່ງພຣະວິນຍານສັກສິດ ເພື່ອເຮັດໃຫ້ເຮົາ ຢືນຢັນ ຂົ້ນຮັບໃຊ້ພຣະອົງ ເຝົ້າບຸຊາ ພຣະອົງພາກພຽນພະຍາຍາມດຳລົງຊີວິດ ຢູ່ໃນອານາຈັກ ຂອງພຣະອົງ ດ້ວຍຄວາມຊື່ສັດ ແລະ ຈິງໃຈຢ່າງສຸດຊຶ້ງ ຂ້າແດ່ ພຣະຜູ້ເປັນເຈົ້າ ພຣະອົງຄືພຣະ ຜູ້ຊົງອຳນາດ ພຣະ ຜູ້ຊົງປະທານ ອະໄພຍະໂທດ ພຣະຜູ້ຊົງ ເມດຕາ ປານີ.

*– ພຣະອັບດຸລບາຮາ.*

## ໄຫວ້ວອນຂໍຄວາມຄຸ້ມຄອງປ້ອງກັນ

ໂອ ຂ້າແດ່ພຣະຜູ້ເປັນເຈົ້າ ໂຜດຊົງເປັນກຳແພງປ້ອງກັນຮັບໃຊ້ທີ່ຊື່ສັດເຫຼົ່ານີ້ ໃຫ້ລອດພົ້ນຈາກຄວາມຊົ່ວທີ່ເກີດຈາກຕົນເອງ ໃຫ້ເຂົາພົ້ນຈາກກິເລດທັງປວງ ພາຍໃນສາຍພະເນດ ແຫ່ງຄວາມເມດຕາປານີ ຂໍຊົງປົກປັກຮັກສາເຂົາ ໃຫ້ພົ້ນຈາກຄວາມມີຈິດໃຈຄັບແຄບກຽດຊັງ ບໍ່ໃຫ້ເຂົາມີຄວາມອິດສາລິດສະຫຍາ ໃຫ້ເຂົາໄດ້ພຳນັກຢູ່ພາຍໃນພາລະກາບ ແຫ່ງຄວາມຮັກຂອງພຣະອົງ ໂຜດຊ່ວຍໃຫ້ເຂົາປອດໄພ ຈາກຄົນອາວຸດແຫ່ງຄວາມສົງໃສ ຂໍໃຫ້ເຂົາ ເປັນຜູ້ສະແດງອອກຊຶ່ງສັນຍາລັກ ແຫ່ງຄວາມຮຸ່ງເຮືອງຂອງພຣະອົງ ໃຫ້ໃບໜ້າ ຂອງເຂົາມີປະກາຍລັ້ດສະໝີ ຈາກແສງທີ່ສົ່ງມາຈາກຮຸ່ງອາລຸນແຫ່ງເອກະພາບສະຫວັນ ໃຫ້ຫົວໃຈຂອງເຂົາຍິນດີໃນຖ້ອຍຄຳວັດຈະນະທີ່ຫຼັ່ງໄຫຼມາ ຈາກອານາຈັກອັນສັກສິດ ຂໍພະລັງອຳນາດ ໂນ້ມນ້າວຊຶ່ງເປັ່ງມາຈາກອານາຈັກແຫ່ງຄວາມຮຸ່ງເຮືອງ ຈົ່ງເພີ່ມພູນຄວາມເຂັ້ມແຂງ ໃຫ້ແກ່ເຂົາພຣະອົງຄືພຣະຜູ້ຊົງ

ພຣະກະລຸນາ ພຣະຜູ້ຄຸ້ມຄອງ ພຣະຜູ້ຊົງມະຫິທານຸພາບ ພຣະຜູ້ຊົງເມດຕາປານີ.

- ພຣະອັບດູລບາຮາ.

## ໄຫວ້ວິ່ງວອນເພື່ອການເຜີຍແຜ່ສາສະໜາ

ໂອ ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າພະອົງປຽບເໝືອນດັ່ງນົກປີກຫັກ ທີ່ບິນໄດ້ຊ້ານານ ຂໍພຣະອົງໄດ້ຊົງໂຜດຊ່ວຍເຫຼືອ ໃຫ້ຂ້າພຣະອົງສາມາດບິນໄປສູ່ຈຸດສູງສຸດ ແຫ່ງຄວາມຈະເລີນຮຸ່ງເຮືອງ ແລະ ຂໍໃຫ້ພົ້ນຈາກກິເລດທັງປວງ ໂຜດຊ່ວຍນຳທາງໃຫ້ຂ້າພຣະອົງ ບິນໄປທົ່ວຂອບຟ້າ ອັນຫາຂອບເຂດບໍ່ໄດ້ນີ້ ດ້ວຍຄວາມສຸກ ແລະ ເພີດເພີນ ຂໍຊົງຊ່ວຍໃຫ້ຂ້າພະອົງເປັ່ງທຳນະສະດຸດີພຣະນາມຂອງພະອົງ ໃນດິນແດນຕ່າງໆ ໂຜດດົນບັນດານເຮັດໃຫ້ຈິດໃຈຂອງຜູ້ໄດ້ຮັບຟັງສຽງເພັ້ງນີ້ ມີຄວາມລົ້ນເລີງເບີກບານ ແລະ ທຳໃຫ້ດວງຕາຂອງເຂົາສົດໃສ ດ້ວຍການສະດຸດເຫັນໃນສັນຍາລັກແຫ່ງການນຳທາງຂອງພຣະອົງ.

ຂ້າແດ່ພຣະຜູ້ເປັນເຈົ້າ ຂ້າພຣະອົງເປັນພຽງຊີວິດໜຶ່ງທີ່ຢູ່ໂດດດ່ຽວ ແລະ ຕ່ຳຕ້ອຍ ບໍ່ມີຜູ້ເກື້ອກູນອື່ນໃດນອກຈາກພຣະອົງ ບໍ່ມີຜູ້ຊ່ວຍເຫຼືອອື່ນໃດ ນອກຈາກພຣະອົງ ແລະບໍ່ມີຜູ້ຄ້ຳຊູອື່ນໃດນອກຈາກພຣະອົງຂໍຊົງໂຜດໃຫ້ຂ້າພຣະອົງຍຶດໝັ້ນໃນການຮັບໃຊ້ພຣະອົງ ໂຜດໃຫ້ພະລັງອຳນາດອັນກ້າແກ່ນຂອງເທວະທູດ ຊ່ວຍເຫຼືອຂ້າພຣະອົງ ຂໍຊົງບັນດານໃຫ້ຂ້າພຣະອົງ ໄດ້ຮັບຄວາມສຳເລັດ ໃນການເຜີຍແຜ່ພຣະທຳ ຂອງພຣະອົງ ແລະຊົງໂຜດດົນບັນດານໃຫ້ຂ້າພຣະອົງ ສາມາດ ກ່າວເຖິງພຣະອັດຊະລິຍະທຳຂອງພຣະອົງໃນໝູ່ມະຫາຊົນ ຂອງພຣະອົງ.

ໂດຍແທ້ຈິງແລ້ວ ພຣະອົງຊົງອາລັກຂາຜູ້ຍາກຈົນຊົງປ້ອງກັນຜູ້ອ່ອນແອ ພຣະອົງຄືພຣະຜູ້ຊົງພາລານຸພາບຊົງອະນຸພາບ ແລະ ຊົງສະຖິດ ຢູ່ເໜືອອຳນາດບັງຄັບໂດຍທັງມວນ.

- ພຣະອັບດຸລບາຮາ,

ພຣະທຳບາງບົດ ທີ່ຄັດຈ້ອນ ພຣະວັດຈະນະແຫ່ງຄຳເລີກລັບ

ດູກ່ອນບຸດແຫ່ງມະນຸດ

ເຈົ້າເປັນອານາຈັກຂອງເຮົາ ແລະ ອານາຈັກຂອງເຮົາ ຈະບໍ່ສາບສນ ເຫດສັນໃດເຈົ້າຈະຢ້ານວ່າຈະສາບສູນໄປ ເຈົ້າເປັນແສງສີຂອງເຮົາ ແລະ ແສງລັດສະໝີຂອງເຮົານັ້ນ ບໍ່ດັບສູນໄປໄດ້ເຫດສັນໃດຈົ່ງຢ້ານຄວາມຕາຍ ເຈົ້າເປັນຄວາມຮຸ່ງເຮືອງຂອງເຮົານັ້ນ ຈະບໍ່ຈືດຈາງຫາຍໄປເຈົ້າເປັນອາພອນຂອງເຮົາ ຈົ່ງຢູ່ໃນຄວາມຮັກຂອງເຈົ້າ ເພື່ອເຮົາເຖີດ ເພື່ອວ່າເຈົ້າ ອາດຈະໄດ້ພົບພໍ້ເຮົາ ໃນອານາຈັກແຫ່ງຄວາມຮຸ່ງເຮືອງ.

## ດູກ່ອນບຸດແຫ່ງທຳມະ

ຈົ່ງຢ່າໄດ້ຂໍຈາກເຮົາໃນສິ່ງໃດ ຊຶ່ງເຮົາບໍ່ປະສົງຈະໃຫ້ ດັ່ງນັ້ນຈົ່ງພໍໃຈໃນສິ່ງທີ່ເຮົາໄດ້ກຳນົດໄວ້ສຳຫຼັບເຈົ້າ ເພາະວ່ານັ້ນແຫຼະ ທີ່ຈະເປັນປະໂຫຍດແກ່ເຈົ້າຫາກວ່າຕົວເຈົ້ານັ້ນເພິ່ງພໍໃຈຕາມນີ້ໄດ້.

## ດູກ່ອນບຸດແຫ່ງມະນຸດ

ຢ່າໄດ້ຫາຍໃຈເປັນຄວາມບາບຂອງຜູ້ອື່ນ ໃນເມື່ອ

ເຈົ້າເອງນັ້ນກໍເປັນຄົນບາບ ຫາກເຈົ້າລະເມີດຄຳສັ່ງອັນນີ້ ເຈົ້າຈະໄດ້ຮັບເຄາະກຳ ແລະ ເຮົາຈະເປັນສັກຂີພະຍານໃນເລື່ອງນີ້.

## ດູກ່ອນບຸດແຫ່ງມະນຸດ

ຈົ່ງໄດ້ພໍໃຈຢູ່ກັບເຮົາ ແລະ ຢ່າໄດ້ສະແຫວງຫາຜູ້ຊ່ວຍເຫຼືອອື່ນໃດ ມີແຕ່ເຮົາເທົ່ານັ້ນ ບໍ່ມີໃຜອື່ນໃດອີກທີ່ຈະທຳໃຫ້ເຈົ້າພໍໃຈໄດ້.

## ດູກ່ອນບຸດແຫ່ງພາວະ

ຈົ່ງສຳຫຼວດຕົວເຈົ້າເອງແຕ່ລະວັນກ່ອນທີ່ຈະຖືກຮຽກຮ້ອງໄປຄິດໄລ່ບັນຊີ ເພາະວ່າຄວາມຕາຍນັ້ນຈະມາເຖິງເຈົ້າ ໂດຍບໍ່ໄດ້ບອກລ່ວງໜ້າ ແລະ ເຈົ້າຈະໄດ້ຖືກຮຽກຮ້ອງໄປຄິດໄລ່ບັນຊີ ສຳຫຼັບການກະທຳຕ່າງໆຂອງເຈົ້າ.

## ດູກ່ອນບຸດແຫ່ງຄວາມລ້ຳເລີດ

ເຮົາໄດ້ທຳໃຫ້ຄວາມຕາຍເປັນຜູ້ນຳສານແຫ່ງຄວາມປິຕິມາເຖິງເຈົ້າ ເຫດສັນໃດເຈົ້າຈຶ່ງເສັຽໃຈນໍ? ເຮົາໄດ້ໃຫ້ແສງສະຫວ່າງສົ່ງຄວາມງາມມາຫາເຈົ້າ ເຫດສັນໃດ

ເຈົ້າຈົ່ງປິດບັງຕົວຂອງເຈົ້າເສຍ.

## ດູກ່ອນບຸດແຫ່ງທຳມະ

ເຮົາຮຽກຮ້ອງເຈົ້າ ດ້ວຍຂ່າວສານອັນປິຕິ ແຫ່ງຄວາມສະຫວ່າງ ຈົ່ງມີຄວາມປິຕິຊົມຊື່ນເຖີດ ເຮົາຮຽກຮ້ອງເຈົ້າໄປສູ່ ສາລາແຫ່ງຄວາມສັກສິດ ຈົ່ງເຂົ້າໄປຢູ່ເຖີດ ເພື່ອວ່າເຈົ້າຈະໄດ້ມີຊີວິດ ຢູ່ໃນຄວາມສະຫງົບຊົ່ວກາລະນານ.

## ດູກ່ອນບຸດແຫ່ງມະນຸດ

ຢ່າໄດ້ລະເລີຍ ນິຕິບັນຍັດຕ່າງໆ ຂອງເຮົາຫາກວ່າເຈົ້າຮັກຄວາມງາມຂອງເຮົາ ແລະ ຈົ່ງຢ່າໄດ້ຫຼົງລືມຄຳແນະນຳຂອງເຮົາ ຫາກວ່າເຈົ້າປະສົງທີ່ຈະໃຫ້ເຮົາເພິ່ງພໍໃຈເຈົ້າ.

## ດູກ່ອນບຸດແຫ່ງມະນຸດ

ຫາກຄວາມຮຸ່ງເຮືອງມາເຖິງເຈົ້າ ຈົ່ງຢ່າໄດ້ປິຕິຍິນດີ ແລະ ຫາກຄວາມຕົກຕ່ຳມາເຖິງ ຈົ່ງຢ່າໄດ້ເສົ້າໂສກ

ເສຍໃຈ ເພາະວ່າທັງສອງຢ່າງນີ້ຈະຜ່ານໄປ ແລະ ບໍ່ມີເຫຼືອແມ້ແຕ່ຮ່ອງຮອຍ.

ດູກ່ອນບຸດແຫ່ງພາວະ

ຫາກຄວາມຍາກຈົນເຖິງເຈົ້າ ຈົ່ງຢ່າເສົ້າໂສກເສຍໃຈ ເພາະວ່າຕໍ່ໄປ ເຈົ້າແຫ່ງຄວາມສົມບຸນຈະມາຢ້ຽມເຈົ້າ ຢ່າໄດ້ຢ້ານກົວຄວາມຕ່ຳຕ້ອຍ ເພາະວ່າວັນໜຶ່ງຄວາມຮຸ່ງເຮືອງຈະມາຢູ່ກັບເຈົ້າ.

ດູກ່ອນບຸດແຫ່ງພາວະ

ຢ່າສາລະວົນຕົວເຈົ້າເອງ ຢູ່ກັບໂລກນີ້ ເພາະວ່າເຮົາ ພິສູດທອງດ້ວຍໄຟ ແລະ ເຮົາພິສູດຄົນຮັບໃຊ້ຄົນຂອງເຮົາດ້ວຍທອງ.

ດູກ່ອນບຸດແຫ່ງພາວະ

ຫົວໃຈຂອງເຈົ້າຄືທີ່ຢູ່ຂອງເຮົາ, ຈົ່ງທຳມັນໃຫ້ບໍລິສຸດ ເພື່ອເຮົາຈະໄປຢູ່ແຍກຫ່າງວິນຍານຂອງເຈົ້າ ຄືສະຖານທີ່ ທີ່ເຮົາຈະປາກົດຕົວເຮົາ ຈົ່ງທຳໃຫ້ມັນສະອາດ ເພື່ອການສະແດງອອກຂອງເຮົາ.

## ດູກ່ອນສະຫາຍ

ໃນອຸດທິຍານຫົວໃຈຂອງເຈົ້ານັ້ນ ຢ່າໄດ້ປູກຝັງສິ່ງໃດນອກຈາກກຸຫລາບແຫ່ງຄວາມຮັກ ແລະ ຢ່າປ່ອຍໃຫ້ນົກໃນຄອນ (ຕົ່ງເກນ) ແຫ່ງຄວາມອາລິດຫລຸດພົ້ນໄປເສຽ ຈົ່ງປະດັບປະດອງຄວາມເປັນສະຫາຍ ກັບຜູ້ປະພຶດດີ ແລະ ຈົ່ງຫລີກລຽງການພົບພໍ້ອະທຳທັງຫລາຍ.

## ດູກ່ອນບຸດແຫ່ງທູລີ

ຈົ່ງບິດຕາຂອງເຈົ້າສາ ເພື່ອວ່າເຈົ້າຈະໄດ້ເຫັນຄວາມງາມຂອງເຮົາ ຈົ່ງເປີດຫູຂອງເຈົ້າສາ ເພື່ອວ່າເຈົ້າຈະໄດ້ ຍິນປະສານສຽງອັນອ່ອນຊອນຂອງນ້ຳຄຳຂອງເຮົາ ຈົ່ງສະລະສິ່ງທີຮຽນຮູ້ຂອງເຈົ້າທັງໝົດ ເພື່ອວ່າເຈົ້າອາດຈະໄດ້ຮັບຮູ້ ຄວາມຮູ້ຂອງເຮົາ ແລະ ຈົ່ງໃຫ້ເຈົ້າປົດເປື້ອງຈາກຄວາມຮັ່ງມີທັງມວນ ເພື່ອວ່າເຈົ້າອາດຈະໄດ້ຮັບສ່ວນແບ່ງອັນຖາວອນ ໄປຈາກທ້ອງທະເລແຫ່ງຄວາມຮັ່ງມີ ອັນບໍ່ສິ້ນສຸດຂອງເຮົາ ບິດຕາຂອງເຈົ້າຈາກສິ່ງທັງປວງ ນອກຈາກຄວາມງາມຂອງ

ເຮົາ ປິດຫູຂອງເຈົ້າຈາກສິ່ງທັງປວງ ນອກຈາກວາຈາ
ຂອງເຮົາສາລະຄວາມຮູ້ທັງປວງ ນອກຈາກຄວາມຮູ້ໃນ
ເຮົາ ດ້ວຍສາຍຕາອັນສັດເຈນ ດ້ວຍຫົວໃຈອັນບໍລິສຸດ
ແລະ ດ້ວຍຫູຮັບຟັງສຽງທີ່ສົນໃຈ ເຈົ້າອາດຈະໄດ້ເຂົ້າ
ມາໃນວິຫານ ແຫ່ງຄວາມວິສຸດທິຂອງເຮົາ.

## ດູກ່ອນຮູບແຫ່ງ ລິ

ເຮົາປາຖະໜາ ທີ່ຈະສົນທະນາກັບເຈົ້າ ແຕ່ວ່າເຈົ້າ
ບໍ່ມີຄວາມໄວ້ວາງໃຈໃນເຮົາ ຄວາມຫວັງຂອງເຈົ້າ ຈຶ່ງ
ໄດ້ໂຄ່ນລົ້ມໄປດັ່ງຕົ້ນໄມ້ຖືກລົ້ມ ຕະຫຼອດເວລາທັງປວງ
ທີ່ເຮົາເຂົ້າໄປໃກ້ເຈົ້າ ເຈົ້າກໍທຳຕົວໃຫ້ໄກໄປຈາກເຮົາ
ເຮົາເລືອກຄວາມຍືນຍົງ ອັນບໍ່ຮູ້ຈັກສິ້ນສຸດໃຫ້ແກ່ເຈົ້າ
ແຕ່ວ່າເຈົ້າເລືອກຄວາມອັບປະໂຫຍດ ຢ່າງບໍ່ມີ ຂອບ
ເຂດໄປເປັນຂອງເຈົ້າເອງ ເວລາຍັງມີຢູ່ຈົ່ງກັບມາເຖີດ
ແລະ ຈົ່ງຢ່າໄດ້ຖິ້ມໂອກາດໃຫ້ເສຽເວລາ.

## ດູກ່ອນບຸດແຫ່ງພື້ນດິນ

ຫາກເຈົ້າປະສົງເຮົາ ກໍຈົ່ງຢ່າ ສະ ແຫວງ ຫາ ຜູ້ ອື່ນ

ນອກຈາກເຮົາ ຫາກເຈົ້າປະສົງຈະເພິ່ງພໍໃຈໃນຄວາມງາມຂອງເຮົາ ກໍ່ຈົ່ງປິດຕາຂອງເຈົ້າເສຍຈາກໂລກແລະຈາກທັງໝົດທີ່ຢູ່ໃນໂລກ ເພາະເຫດວ່າ ໃຈຂອງເຮົາແລະໃຈຂອງຜູ້ອື່ນນອກໄປຈາກເຮົາ ເປັນສະເໝືອນໄຟກັບນ້ຳ ບໍ່ອາດຈະຢູ່ຮ່ວມກັນໃນຫົວໃຈອັນດຽວໄດ້.

## ດູກ່ອນຄົນແປກໜ້າ ທີ່ໄດ້ມາເປັນເພື່ອນມິດ

ທຽນແຫ່ງຫົວໃຈຂອງເຈົ້າ ໄດ້ຈູດໃຫ້ສະຫວ່າງຈາກມືແຫ່ງອຳນາດຂອງເຮົາ ຢ່າໄດ້ທຳໃຫ້ມັນມືດໄປເສຍດ້ວຍຕົວຂອງເຈົ້າເອງ ແລະ ດ້ວຍຄວາມປາຖະໜາຂອງເຈົ້າ ສິ່ງທີ່ຈະຮັກສາຄວາມເຈັບໄຂ້ ຂອງເຈົ້າທັງປວງໄດ້ນັ້ນ ຄືການລະນຶກເຖິງເຮົາ ຢ່າລືມມັ້ນເສຍ ຈົ່ງເອົາຄວາມຮັກຂອງເຮົາເປັນສົມບັດຂອງເຈົ້າ ແລະ ຈົ່ງທະນຸຖະໜອມມັນໄວ້ຢູ່ໃນສາຍຕາ ແລະ ຊີວິດ ຂອງເຈົ້າເອງ.

## ດູກ່ອນບຸດແຫ່ງໂລກ

ໃນພູມີແຫ່ງພາວະນັ້ນ ມີຄວາມອະພິຣົມສ່ວນໃນອາ

ນາຈັກອັນເປັນອະນະຕະນັ້ນ ຄວາມຮຸ່ງເຮືອງມີພະລັງ
ສູງກ່ວາມາກນັກ ຫາກເຈົ້າຈະຜ່ານພົບແຫ່ງຄວາມຕາຍ
ນີ້ໄປ ຈາກມືຂອງຜູ້ຖືສານ ຈາກພຣະຜູ້ເປັນເຈົ້າມີຖ້ວຍ
ນ້ຳອັນເລີກລັບ ທີ່ຈະໃຫ້ເຈົ້າໄດ້ດື່ມ ເພື່ອພົບຄວາມປີ
ຕິອັນວິເສດສຸດ ຫາກວ່າເຈົ້າບັນລຸເຖິງພາວະນີ້ແລ້ວ
ເຈົ້າຈະພົ້ນໄປຈາກ ຄວາມ ສາບ ສູນ ແລະ ຈາກຄວາມ
ຕາຍ ຈາກຄວາມອິດເມື່ອຍ ແລະ ຄວາມບາບ.

## ດູກ່ອນບຸດແຫ່ງນາງຮັບໃຊ້ຂອງເຮົາ

ຈົ່ງດື່ມສາຍທານແຫ່ງຄວາມເລີກລັບ ອັນເປັນທິບ
ຈາກຄຳເວົ້າຂອງຜູ້ເຕັມປ່ຽມ ດ້ວຍຄວາມກະລຸນາ ແລະ
ຈົ່ງຫາຄວາມສະຫຼາດຈາກຄຳ ທີ່ສາສະດາໄດ້ອະທິບາຍ
ໄວ້ ຈົ່ງເພາະພືດແຫ່ງປັນຍາທີ່ໄປຈາກເຮົາ ເທິງພົ້ນ
ແຫ່ງດວງໃຈ ອັນບໍລິສຸດຂອງເຈົ້າ ແລະ ຈົ່ງບຳລຸງຮັກ
ສາພືດນັ້ນດ້ວຍຄວາມຕັ້ງໃຈ ເພື່ອວ່າກຸຫຼາບງາມແຫ່ງ
ຄວາມຮູ້ ແລະ ສະຕິປັນຍາຈະໄດ້ງອກງາມ ສົດຊື່ນໃນ
ນະຄອນ ແຫ່ງຫົວໃຈຂອງເຈົ້າ.

## ປະມວນພຣະທຳບາງບົດ ຂອງພຣະບາຣາອຸລລາຫ໌

ເຮົາຂໍປະກາດວ່າ ຍຸກນີ້ຄືຍຸກທີ່ມະນຸດຊາດສາມາດເຫັນພຣະພັກ ໄດ້ຍິນພຣະສຸລະສຽງຂອງພຣະຜູ້ຊົງສະເດັດມາຕາມຄຳສັນຍາຢ່າງແທ້ຈິງ ພຣະສຸລະສຽງຂອງພຣະຜູ້ເປັນເຈົ້ານັ້ນ ດັງກ້ອງກັງວານຂຶ້ນແລ້ວ ແລະ ພະພັກຂອງພຣະອົງ ກໍ່ຊົງລັງສີສູ່ມະນຸດ ຈຳເປັນທີ່ມະນຸດທຸກຄົນຈະຕ້ອງບຳຣອຍແຕ່ງຄຳເວົ້າ ທີ່ເຫຼວໄຫຼໃຫ້ໝົດສິ້ນໄປຈາກພື້ນໝາກຫົວໃຈຂອງຕົນ ເປັນໂອກາດທີ່ທຸກຄົນຈະເປີດຫົວໃຈ ພິຈາລະນາສັນຍາລັກແຫ່ງພຣະທຳຂອງພຣະອົງ ໄດ້ປາກົດຄວາມຈິງທີ່ພິສູດໃຫ້ເຫັນຣາຊະພາລະກິດ ແລະ ສັນຍາແຫ່ງຄວາມຮຸ່ງເຮືອງຂອງພຣະອົງ ດ້ວຍດວງຈິດທີ່ລະວາງແລ້ວ ຊຶ່ງອະຄະຕິທັງປວງ.

ພຣະຜູ້ຊົງຄວາມຍິ່ງໃຫຍ່ ຊົງຕັດໄວ້ວ່າ ດຸກ່ອນບຸດແຫ່ງມະນຸດ ຈຸດມຸ້ງໝາຍເບື້ອງຕົ້ນຂອງສາສະໜາຂອງພຣະຜູ້ເປັນເຈົ້າກໍ່ຄືໃຫ້ສາສະໜາ ເປັນເຄື່ອງຊ່ວຍສ້າງສັນ ຄວາມສະມັກສະໝານສາມັກຄີ ແລະ ພິທັກຮັກສາປະໂຫຍດຮ່ວມກັນຂອງມະນຸດຊາດ ສາສະໜາ ຊ່ວຍໃຫ້

ເກີດຄວາມຮັກ ແລະ ມິດຕະພາບໃນໝູ່ຂອງມະນຸດ ຈຶ່ງຢ່າໃຫ້ສາສະໜາເປັນຕົ້ນເຫດ ນຳໄປສູ່ຄວາມຂັດແຍ້ງຄວາມວິວາດບາດໝາງ ຄວາມກຽດຊັງ ແລະ ການເປັນສັດຕູຕໍ່ກັນ ຮາກຖານແຫ່ງສັດຈະທຳນີ້ທ່ຽງຕົງແນ່ນອນແລະ ບໍ່ຄອນແຄນ ແຕ່ຄວາມໝູນວຽນ ແລະ ໂຊກຊາຕາຂອງໂລກ ຈະມີອະນຸພາບທຽບສະເໝີກັບຄຳສັ່ງສອນທຸກຂໍ້ທີ່ຕັ້ງຢູ່ບົນຖານແຫ່ງສັດຈະທຳນີ້ ການສັດຕະວັດນັບອະສົງໄຂ ທີ່ຜັນແປໄປນັ້ນ ບໍ່ອາດຈະທຳໂຄງຮ່າງແຫ່ງສັດຈະນີ້ໄດ້.

ຈົ່ງດຳນຸດລົງສູ່ວັງມະຫາສະມຸດ ແຫ່ງວັດຈະນະຂອງເຮົາ ເພື່ອເຈົ້າຈະໄດ້ຄົ້ນເຫັນ ຄວາມເລິກລັບໃນພຣະທຳ ແລະ ຈະໄດ້ຄົ້ນພົບໄຂ່ມຸກ ແຫ່ງອັດຊະລິຍະທີ່ແຝງລີ້ ຢູ່ໃນຄວາມລ້ຳລຶກນັ້ນຈົ່ງໃຫ້ຄວາມສົນໃຈ ເພື່ອຄວາມຕັ້ງໃຈ ທີ່ເຈົ້າຈະຮັບສັດຈະທຳແຫ່ງສາສະໜານີ້ຈະບໍ່ໄດ້ໂອນເອນ ເພາະນີ້ຄືສາສະໜາ ທີ່ເຄີຍໃຫ້ເຫັນສັກດານຸພາບ ຂອງພຣະຜູ້ເປັນເຈົ້າ ຊຶ່ງຄວາມຍິ່ງໃຫຍ່ຂອງພຣະອົງ ໄດ້ຖືກສະຖາປານາໄວ້ ຈົ່ງຮີບເລັ່ງຟ້າວສູ່ພຣະອົງ ດ້ວຍໃບໜ້າທີ່ເບີກບານດ້ວຍຄວາມຫັນສາ ນີ້

ຄືສາລະໜາ ທີ່ບໍ່ມີວັນປ່ຽນຜັນແປ ຄົງຄວາມເປັນນິລັນດອນທັງໃນອະດີດ ແລະ ອານາຄົດ ຂໍໃຫ້ຜູ້ທີ່ເຊາະສະແຫວງຫາຈຶ່ງໄດ້ພົບພໍ້ ຂໍໃຫ້ຜູ້ທີ່ປະຕິເສດຈຶ່ງຄົ້ນຫາແທ້ຈິງແລ້ວ ພຣະຜູ້ເປັນເຈົ້າ ຊຶ່ງຄວາມພຽງພໍໃນພຣະອົງເອງ ເປັນຄວາມພຽງພໍ ທີ່ເກີດຄວາມຕ້ອງການໃນສັບພະສິ່ງທີ່ພຣະອົງຊົງສ້າງຂຶ້ນມາ.

ຈຶ່ງກ່າວໄວ້ວ່າ ຫາກເຈົ້າເຊື່ອ ແລະ ຍອມຮັບສັດຈະທຳນີ້ ເຈົ້າຍ່ອມຈະຖະນັດວ່າ ສາລະໜາ ທີ່ຢູ່ໃນພຣະຫັດຂອງພຣະຜູ້ເປັນເຈົ້ານັ້ນຄື ຕາຊິງຊັ່ງບັນດາຜູ້ທີ່ຢູ່ໃນສະຫວັນ ແລະ ເທິງແຜ່ນດິນ ແລະ ເປັນເກນກຳໜົດຊາຕາຊີວິດ ຂອງບັນດາເຂົາເຫຼົ່ານັ້ນ ສາລະໜາໃຫ້ຄວາມສົມບູນຮັ່ງມີແກ່ຜູ້ຍາກຈົນ ໃຫ້ຄວາມກະຈ່າງແຈ້ງແກ່ບັນດິດ ສົ່ງເສີມໃຫ້ຜູ້ທີ່ເສາະສະແຫວງຫາ ໄດ້ທະຍານຂຶ້ນສູ່ເບື້ອງບົນ ທີ່ປະທັບຂອງພຣະຜູ້ເປັນເຈົ້າ ຈົ່ງລະວັງຢ່າໃຫ້ ສາລະໜາເປັນ ສາຍເຫດແຫ່ງຄວາມແຕກແຍກລະຫວ່າງພວກເຈົ້າ ຈົ່ງທະນຸບຳລຸງໃຫ້ຄວາມໝັ້ນຄົງທີ່ເຈົ້າມີຢູ່ໃນສາລະໜາ ຂອງພຣະຜູ້ເປັນເຈົ້າ ພຣະຜູ້ຊົງຍິ່ງໃຫຍ່ ພຣະຜູ້ຊົງເປັນທີ່ຮັກນັ້ນ ໝັກແໜ້ນປະດຸດ

ດັ່ງພູເຂົາທີ່ບໍ່ເຄື່ອນຍ້າຍ.

ຈົ່ງໂອບອ້ອມອາລີ ເມື່ອຍາມປະສົບຄວາມຮັ່ງມີບໍລິບຸນ ຈົ່ງອະນຸໂມທະນາ ເມື່ອຄວາມທີ່ຕົກທຸກໄດ້ຍາກຈົ່ງກະທຳຕົນ ໃຫ້ເປັນທີ່ວາງໃຈຂອງເພື່ອນບ້ານ ໃຫ້ເບິ່ງເຂົາດ້ວຍໃບໜ້າສົດໃສ ເຕັມປ່ຽມໄປດ້ວຍໄມຕີຈິດ ມິດຕະພາບ ຈົ່ງເປັນດັ່ງສົມບັດຂອງຜູ້ຍາກຈົນ ຈົ່ງເຕືອນສະຕິທີ່ຄົນລ້າລວຍ ຈົ່ງຕອບສະໜອງຄຳຮ້ອງຂໍຂອງຜູ້ທີ່ຂັດສົນ ຈົ່ງດຳລົງຮັກສາໄວ້ຊຶ່ງສັກສີແຫ່ງຄຳໝັ້ນສັນຍາ ຈົ່ງມີຄວາມທ່ຽງທຳໃນການລົງຄວາມເຫັນ ຈົ່ງລະມັດລະວັງຄຳເວົ້າ ຢ່າສະແດງຄວາມ ອະຍຸດຕິທຳຕໍ່ຜູ້ໃດ ຈົ່ງອ່ອນນ້ອມຖ່ອມຕົວຕໍ່ຄົນທຸກຄົນ ຈົ່ງເປັນສະເໝືອນດັ່ງດວງປະທີບທີ່ນຳທາງຄົນ ທີ່ເດີນຢູ່ໃນຄວາມມືດ ເປັນຄວາມສຸກທັນສາແກ່ຄົນທີ່ໂສກເສົ້າ ເປັນທ້ອງທະເລສຳຫຼັບຜູ້ທີ່ກະຫາຍ ເປັນຮົ່ມເງົາທີ່ພັກພາອາໄສແກ່ຜູ້ທີ່ຕົກ ຢູ່ໃນຄວາມທຸກ ເປັນທັງຜູ້ໃຫ້ຄວາມອຸປະຖຳ ແລະ ປົກປ້ອງຄົນຜູ້ທີ່ຖືກກົດຂີ່ຂົ່ມເຫັງ ຈົ່ງໃຫ້ຄວາມຊື່ສັດໝັ້ນຄົງ ແລະ ຄວາມຊື່ຕົງ ເປັນລັກສະນະນິໄສ ທີ່ປາກົດເດັ່ນຊັດ ຈົ່ງເປັນປາກໜຶ່ງ ບ້ານສຳຫຼັບຄົນ

ແປກໜ້າ ເປັນຢາສຳຫຼັບຄົນທີ່ທົນທຸກທໍລະມານ ເປັນປ້ອມໝັ້ນອັນແຂງແຮງແກ່ຜູ້ລີ້ໄພ ຈົ່ງເປັນດວງຕາ ແກ່ຄົນຕາບອດ ເປັນແສງເຍືອງນຳທາງແກ່ຜູ້ເຖົ້າ ຜູ້ທີ່ເດີນໃນທົບທາງທີ່ຜິດພາດ ເປັນເຄື່ອງປະດັບໂສມໜ້າຂອງສັດຈະທຳ ເປັນມົງກຸດປະດັບພຣະບາລາດ ແຫ່ງຄວາມຈົ່ງຮັກພັກດີ ເປັນຫຼັກສີລາຂອງໂບດແຫ່ງຄວາມທ່ຽງທຳ ເປັນລົມຫາຍໃຈແຫ່ງຊີວິດແກ່ຮ່າງກາຍຂອງມະນຸດຊາດ ເປັນສົບຍານຂອງທູດ ແຫ່ງຄວາມຍຸດຕິທຳ ເປັນດວງປະທີບ ທີ່ສະລັດແສງເໜືອຟາກຟ້າ ແຫ່ງຄຸນງາມຄວາມດີເປັນນ້ຳຄ້າງທີ່ຢາດຢົດລົງເທິງພື້ນ ຫົວໃຈຂອງມະນຸດ ເປັນນາວາໃນທ້ອງທະເລແຫ່ງຄວາມຮອບຮູ້ ເປັນດວງຕາເວັນ ໃນວິມານສະຖານແຫ່ງບຸນຍະບາລະມີເປັນອາຍະມະນີປະດັບມົງກຸດ ແຫ່ງອັດສະລິຍະພາບເປັນແສງສະຫວ່າງທີ່ ສອດສ່ອງເວຫາແຫ່ງການກໍ່ກຳເກີດມາຊົ່ວຊີວິດຂອງເຈົ້າ ເປັນໝາກໄມ້ເທິງຕົ້ນແຫ່ງມະນຸດຊາດ.

ພຣະຜູ້ຊົງຄວາມງາມອັນອຸດົມພອນຊົງຍອມຖືກລ້າງດ້ວຍໂສ້ໝັກ ເພື່ອມະນຸດຈະໄດ້ຫຼຸດພົ້ນ ຈາກພັນທະນາ

ການ ພຣະອົງຊົງຍອມຕົກເປັນນັກໂທດຖືກຄຸມຂັງຢູ່ໃນ
ບ່ອນຄຸກມືດອັນແຂງແກ່ນນີ້ ເປັນການອຸທິດອົງຄະເພື່ອ
ໃຫ້ໂລກໄດ້ບັນລຸສູ່ອິສະລະພາບອັນແທ້ຈິງພຣະອົງຊົງດື່ກ
ຈົບເຖິງກົ້ນຖ້ວຍ ແຫ່ງຄວາມໂສກເສົ້າ ເພື່ອແລກກັບ
ການທີ່ມະນຸດໃນໂລກ ຈະໄດ້ມີຄວາມສຸກສັນ ມີຄວາມ
ເບີກບານຕະຫຼອດໄປ ນີ້ຄືການທີ່ພຣະອົງເປັນການສະ
ແດງອອກ ຊຶ່ງຄວາມປານີຂອງພຣະຜູ້ເປັນເຈົ້າ ພຣະຜູ້
ຊົງເມດຕາ ພຣະຜູ້ຊົງກະລຸນາທີ່ສຸດ ດູກ່ອນບັນດາສາ
ສະນິກະຊົນ ຜູ້ທີ່ມີສັດທາ ໃນຄວາມເປັນເອກະພາບ
ຂອງພຣະຜູ້ເປັນ ເຮົາຍອມຖືກຍ່າຍີ ເຮົາຍອມຖືກຫຍຽດ
ຫຍາມ ແລະ ລັງກຽດ ເພື່ອແລກກັບພາລະກິດທີ່ເຈົ້າຈະ
ໄດ້ປະສົບຄວາມຈະເລີນ ອັນສູງສົ່ງຍິ່ງໆຂຶ້ນໄປ ຍອມ
ທົນຮັບຄວາມຍາກລຳບາກອັນເຫຼືອທີ່ຈະພັນລະນາເພື່ອ
ວ່າເຈົ້າຈະໄດ້ກ້າວໄປສູ່ຄວາມຮຸ່ງເຮືອງອັນສົມບນສືບຕໍ່
ໄປ ຈຶ່ງເປັນລັກສະນະການກະທຳຂອງບັນດາຜູ້ທີ່ໄດ້ມີຊີ
ວິດຢູ່ຄຽງຄູ່ກັບພຣະຜູ້ເປັນເຈົ້າ ພວກເຂົາບັງຄັບ ໃຫ້
ພຣະຜູ້ຊົງສະເດັດມາສ້າງສັນໂລກໃໝ່ ຊຶ່ງກຳລັງຕົກຢູ່
ໃນທີ່ຄຸມຂັງ ໃນຖິ່ນທີ່ຣົກຮ້າງເປົ່າປ່ຽວ ຢ່າງທາທີໃດ

ບຽບບໍ່ໄດ້.

ຈາກບົດພຣະທຳບາງບົດຂອງ ພຣະອັບດຸລບາຣາ

ດູກ່ອນຜູ້ທີ່ຕັ້ງໃຈ ເຂົ້າສູ່ພຣະພັກ ຂອງພຣະ ຜູ້ເປັນເຈົ້າ ຈົ່ງປິດຕາຢ່າເບິ່ງສິ່ງໃດໆທັງໝົດ ແຕ່ຈົ່ງຕັ້ງມະໂນທຳສູ່ແດນສວງສະຫວັນ ຂອງພຣະຜູ້ຊົງຄວາມຮຸ່ງເຮືອງເໜືອຄວາມຮຸ່ງເຮືອງໃດໆ.

ຈົ່ງອະທິຖານຂໍສິ່ງທີ່ເຈົ້າປາຖະໜາຈາກພຣະອົງ ຈົ່ງສະແຫວງຫາສິ່ງທີ່ເຈົ້າຕ້ອງການ ຈາກພຣະອົງ ເທົ່ານັ້ນ ພຽງແຕ່ທອດສາຍຕາ ພຣະອົງກໍ່ຈະປະທານຄວາມຫວັງນັບແສນເທົ່າໃຫ້ແກ່ເຈົ້າ ພຽງແຕ່ລວດສາຍຕາພຣະອົງກໍ່ຈະສາມາດຮັກສາຄວາມເຈັບໄຂ້ ທີ່ບໍ່ອາດຈະຊ່ວງເຊົາໄດ້ເປັນແສນໆພະຍາດພຽງແຕ່ປົງພຣະສຽນລົງພຣະອົງກໍຊົງທາໂອສົດໃຫ້ບາດແຜ ເທິດຫາຍໄດ້ພາຍໃນຊົ່ວພິບຕາ ພຽງແຕ່ເບິ່ງແວບດຽວຫົວໃຈຂອງຄົນທັງຫລາຍ ກໍ່ຈະເປັນອິດສະລະຈາກພັນທະນາການ ແຫ່ງຄວາມເສົ້າໂສກພຣະອົງຊົງດຳເນີນພາລະກິດຕາມຄອງທຳ ທີ່ຊົງປະຕິບັດ ສ່ວນພວກເຮົານັ້ນ ມີຫົນທາງອື່ນໃດອີກໜີ ?

ພຣະອົງ ຊົງດົນບັນດານໃຫ້ມີຄວາມເປັນໄປ ຕາມພຣະໄທທີ່ປະສົງຊົງບັນດານທຸກສັບພະສິ່ງໃນພຣະໄທ ປາຖະໜາ ດ້ວຍປະການລະຊະນີ້ ຈຶ່ງຄວນທີ່ເຈົ້າທັງຫຼາຍ ຈະຕ້ອງນ້ອມສິລະເຄົາຣົບຕໍ່ພຣະອົງ ຂໍເຈົ້າຈົ່ງມອບຄວາມໄວ້ວາງໃຈ ແດ່ພຣະຜູ້ເປັນເຈົ້າ ພຣະຜູ້ຊົງມີອະລິຍະຄວາມເມດຕາ ເໜືອຄວາມເມດຕາຂອງຜູ້ໃດທັງຫຼາຍ.





## ງານສະຫຼອງບຸນສິບເກົ້າວັນ

| ເດືອນທີ | ວັນທີ | ເລີ່ມຈັດງານຫຼັງດວງອາທິດຕົກໃນວັນທີ | ຊື່ເດືອນພາສາອະຣາບິກ | ຄວາມໝາຍ |
|---|---|---|---|---|
| 1 | 21 ມີນາ | 20 ມີນາ | ບາຮາ | ສະຫງ່າງາມກຽດຕິຍົດຊື່ສຽງ |
| 2 | 9 ເມສາ | 6 ເມສາ | ຈາລາລ | ກຽດຕິຍົດຊື່ສຽງ |
| 3 | 28 ເມສາ | 27 ເມສາ | ຈາມາລ | ຄວາມສວຍງາມ |
| 4 | 17 ພຶດສະພາ | 16 ພຶດສະພາ | ອາສາມາດ | ຄວາມຍິ່ງໃຫຍ່ |
| 5 | 5 ມິຖຸນາ | 5 ມິຖຸນາ | ນູຣ | ແສງສະຫວ່າງ |
| 6 | 24 ມິຖຸນາ | 23 ມິຖຸນາ | ຣາໝາດ | ຄວາມຍິ່ງໃຫຍ່ |
| 7 | 13 ກໍລະກົດ | 12 ກໍລະກົດ | ຄາລີມາດ | ຖ້ອຍຄຳ |
| 8 | 1 ສິງຫາ | 31 ກໍລະກົດ | ຄາມາລ | ຄວາມສົມບູນ |

| | | | | |
|---|---|---|---|---|
| 9 | 20 ສິງຫາ | 19 ສິງຫາ | ອິສນາ | ພຣະບານ |
| 10 | 8 ກັນຍາ | 7 ກັນຍາ | ອິສຊາຕ | ອານຸພາບ |
| 11 | 27 ກັນຍາ | 26 ກັນຍາ | ມັສຊິຍາຕ | ຄວາມປະສົງ |
| 12 | 16 ຕຸລາ | 15 ຕຸລາ | ອິລ | ຄວາມຮູ້ |
| 13 | 4 ພະຈິກ | 3 ພະຈິກ | ກຸດຣາຕ | ອຳນາດ |
| 14 | 23 ພະຈິກ | 22 ພະຈິກ | ໂກລ | ຄຳເວົ້າ |
| 15 | 12 ທັນວາ | 11 ທັນວາ | ມາຊເອລ | ຄຳຖາມ |
| 16 | 31 ທັນວາ | 30 ທັນວາ | ຊາຣັພ | ກຽດຕິຄຸນ |
| 17 | 19 ມັງກອນ | 18 ມັງກອນ | ສຸລຕານ | ເດຊານຸພາບ |
| 18 | 7 ກຸມພາ | 6 ກຸມພາ | ມຸລ | ອານາຈັກ |
| 19 | 2 ມີນາ | 1 ມີນາ | ອາລາ | ຄວາມສູງສົງ |